# ທະນາຄານ ອຸດສາຫະກໍາ ແລະ ການຄ້າຈີນ ຈໍາກັດ
# ສາຂາ ນະຄອນຫຼວງວຽງຈັນ

## ເອກະສານລາຍງານການເງິນ

## ແລະ

## ບົດລາຍງານຂອງຜູ້ກວດສອບບັນຊີອິດສະລະ
## ສໍາລັບປີການບັນຊີສິ້ນສຸດ ວັນທີ 31 ທັນວາ 2017

ເອກະສານລາຍງານການເງິນ ແລະ ບົດລາຍງານຂອງຜູ້ກວດສອບບັນຊີສະບັບນີ້ແມ່ນຖືກລາຍງານເປັນພາສາອັງກິດ. ສ່ວນສະບັບພາສາລາວ ແມ່ນເປັນພຽງສະບັບສົມທຽບເທົ່ານັ້ນ, ໃນກໍລະນີທີ່ບໍ່ສອດຄ່ອງ ແມ່ນຈະຍຶດຖືສະບັບພາສາອັງກິດເປັນຕົວຫຼັກ.

The Financial Statements and Independent Auditor's Report have been prepared in English. The Lao version is reference only; in case of discrepancies, the English version shall prevail.

ທະນາຄານ ອຸດສາຫະກຳ ແລະ ການຄ້າຈີນ ຈຳກັດ ສາຂາ ນະຄອນຫຼວງວຽງຈັນ

**ສາລະບານ** **ໜ້າ**


| | | |
|---|---|---|
| 1 | ຂໍ້ມູນທົ່ວໄປກ່ຽວກັບສາຂາ | 1 |
| 2 | ຄວາມຮັບຜິດຊອບຂອງຄະນະຜູ້ບໍລິຫານຕໍ່ເອກະສານລາຍງານການເງິນ | 2 - 3 |
| 3 | ບົດລາຍງານຂອງຜູ້ກວດສອບບັນຊີອິດສະລະ | 4 - 7 |
| 4 | ໃບລາຍງານຖານະການເງິນ | 8 - 9 |
| 5 | ໃບລາຍງານຜົນການດຳເນີນງານ | 10 - 11 |
| 6 | ໃບລາຍງານສ່ວນປ່ຽນແປງທຶນ | 12 |
| 7 | ໃບລາຍງານກະແສເງິນສົດ | 13 - 14 |
| 8 | ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ | 15 - 41 |

## ຂໍ້ມູນທົ່ວໄປກ່ຽວກັບສາຂາ

| | |
|---|---|
| ທະນາຄານ | ທະນາຄານ ອຸດສາຫະກຳ ແລະ ການຄ້າຈີນ ຈຳກັດ<br>ສາຂາ ນະຄອນຫຼວງວຽງຈັນ |
| ໃບອະນຸຍາດ ດຳເນີນທຸລະກິດ<br>ທະນາຄານ ເລກທີ | 18/ທຫລ, ລົງວັນທີ 08 ພຶດສະພາ 2015<br>ໃບທະບຽນວິສາຫະກິດ ເລກທີ 519<br>ລົງວັນທີ 28 ກໍລະກົດ 2015 |
| ຄະນະຜູ້ບໍລິຫານ | ທ່ານ ລູ ຈ້ຽນ ຜູ້ອຳນວຍການ<br>ທ່ານ ຈໍຊິ່ງ ປົວສີເບັ້ງມາ ຮອງຜູ້ອຳນວຍການ<br>ທ່ານ ເສີນ ເຫວີນສຽນ ຮອງຜູ້ອຳນວຍການ |
| ທີ່ຕັ້ງສຳນັກງານ | ໜ່ວຍ 12,ຖະໜົນ ອາຊຽນ<br>ບ້ານ ສີບຸນເຮືອງ<br>ເມືອງ ຈັນທະບູລີ<br>ນະຄອນຫຼວງວຽງຈັນ, ສປປ ລາວ |
| ຜູ້ກວດສອບບັນຊີ | ບໍລິສັດ ເຄພີເອັມຈີ ລາວ ຈຳກັດ<br>ຊັ້ນ 4.ຕຶກ ເຄພີ ທາວເວີ<br>ຖະໜົນ 23 ສິງຫາ<br>ຕູ້ ປ.ນ 6978<br>ນະຄອນຫຼວງວຽງຈັນ, ສ.ປ.ປ ລາວ |

## ຄວາມຮັບຜິດຊອບຂອງຄະນະຜູ້ບໍລິຫານຕໍ່ເອກະສານລາຍງານການເງິນ

ຄະນະຜູ້ບໍລິຫານຂອງ ທະນາຄານ ອຸດສາຫະກຳ ແລະ ການຄ້າຈີນ ຈຳກັດ ສາຂາ ນະຄອນຫຼວງວຽງຈັນ ("ສາຂາ") ມີ ຄວາມຮັບຜິດຊອບຕໍ່ການກະກຽມ ແລະ ຮັບປະກັນວ່າເອກະສານລາຍງານການເງິນ ຖືກຕ້ອງຕາມຄວາມເປັນຈິງ ໃນ ສາລະສຳຄັນທັງໝົດ, ຖານະການເງິນ ຂອງສາຂາ ນະວັນທີ 31 ທັນວາ 2017 ແລະ ໃບລາຍງານຜົນການດຳເນີນງານ, ໃບລາຍງານສ່ວນປ່ຽນແປງທຶນ ແລະ ຄັງສຳຮອງອື່ນໆ ແລະ ໃບລາຍງານກະແສເງິນສົດ ສຳລັບປີການບັນຊີສິ້ນສຸດໃຫ້ ສອດຄ່ອງກັບລະບຽບການບັນຊີ ຂອງ ທະນາຄານ ແຫ່ງ ສປປ ລາວ ແລະ ຫຼັກການບັນຊີ ໃນ ສປປ ລາວ. ໃນການ ກະກຽມເອກະສານລາຍງານການເງິນ ຜູ້ບໍລິຫານຂອງສາຂາ ຕ້ອງໄດ້ປະຕິບັດດັ່ງນີ້:

i) ນຳໃຊ້ນະໂຍບາຍການບັນຊີທີ່ເໝາະສົມ ພ້ອມເອກະສານປະກອບ ຢ່າງສົມເຫດສົມຜົນ, ພ້ອມການຕັດສິນຄາດຄະເນ ຢ່າງຮອບຄອບ ແລະ ພ້ອມນຳມາປະຕິບັດຢ່າງຕໍ່ເນື່ອງ;

ii) ສອດຄ່ອງກັບລະບຽບການບັນຊີຂອງທະນາຄານ ແຫ່ງ ສປປ ລາວ ແລະ ຫຼັກການບັນຊີໃນ ສປປ ລາວ, ໃນກໍລະນີ ຫາກມີຄວາມແຕກຕ່າງທາງດ້ານຜົນປະໂຫຍດໃນການນຳສະເໜີຕາມຄວາມເປັນຈິງ ຕ້ອງຮັບປະກັນວ່າ ເອກະສານ ລາຍງານເຫຼົ່ານີ້ໄດ້ເປີດເຜີຍຂໍ້ມູນຢ່າງເໝາະສົມ, ພ້ອມອະທິບາຍໃຫ້ເຫດຜົນຕົວຈິງທີ່ສົມເຫດສົມຜົນໃນເອກະສານ ລາຍງານການເງິນ;

iii) ເກັບຮັກສາເອກະສານການບັນທຶກບັນຊີຢ່າງຄົບຖ້ວນ ແລະ ລະບົບການຄຸ້ມຄອງພາຍໃນຢ່າງມີປະສິດທິພາບ;

iv) ປະຕິບັດຂັ້ນຕອນທີ່ສົມເຫດສົມຜົນ ເພື່ອຄວາມປອດໄພຂອງຊັບສິນຂອງສາຂາ ແລະ ເພື່ອຫຼີກລ່ຽງ ແລະ ກວດພົບ ການສໍ້ໂກງ, ຂໍ້ຜິດພາດ ແລະ ສິ່ງຜິດປົກກະຕິອື່ນໆ;

v) ກະກຽມເອກະສານລາຍງານການເງິນ ບົນພື້ນຖານຄວາມສືບເນື່ອງໃນການດຳເນີນທຸລະກິດ, ຍົກເວັ້ນໃນກໍລະນີ ທີ່ ທາງສາຂາຫາກຕັ້ງຂໍ້ສົມມຸດຖານ ຫຼື ຄາດຄະເນວ່າບໍ່ເໝາະສົມທີ່ທາງສາຂາຈະດຳເນີນງານຕໍ່ໄປ ໃນອະນາຄົດ; ແລະ

vi) ຄຸ້ມຄອງ ແລະ ຊີ້ນຳສາຂາຢ່າງມີປະສິດທິພາບ, ມີສ່ວນຮ່ວມໃນການຕັດສິນໃຈຕໍ່ບັນຫາສຳຄັນ ທີ່ອາດມີຜົນກະທົບ ຕໍ່ການດຳເນີນງານຂອງສາຂາ ແລະ ຜົນດຳເນີນງານ ແລະ ສາຂາຄວນສະແດງ ໃຫ້ເຫັນວ່າຜົນຂອງການຕັດສິນໃຈ ດັ່ງກ່າວນັ້ນ ແມ່ນສາມາດເຫັນຜົນໄດ້ໃນເອກະສານລາຍງານການເງິນຂອງສາຂາ.

ຄະນະຜູ້ບໍລິຫານຂໍຢັ້ງຢືນວ່າໄດ້ປະຕິບັດຕາມເງື່ອນໄຂ ທີ່ກ່າວມາຂ້າງເທິງຢ່າງຄົບຖ້ວນ ໃນການກະກຽມເອກະສານລາຍ ງານການເງິນ.


Industrial and Commercial Bank of China LTD. VIENTIANE BRANCH P.O.BOX：7302,Vientiane Capital,Lao PDR.
Tel：00856-21-258888 Ext：8019 Fax：00856-21-258889 Website: www.icbc.com.la Email: icbcvte@la.icbc.com.cn

## ການຮັບຮອງເອກະສານລາຍງານການເງິນ

ພວກຂ້າພະເຈົ້າ ທ່ານ ລູ ຈ້ຽນ, ຕາງໜ້າຄະນະຜູ້ບໍລິຫານ ຂໍຮັບຮອງວ່າ ເອກະສານລາຍງານການເງິນ ຈາກໜ້າ 08 ຫາ 41 ແມ່ນນຳສະເໜີຢ່າງເໝາະສົມຕາມຄວາມເປັນຈິງໃນສາລະສຳຄັນທັງໝົດ, ຖານະການເງິນຂອງສາຂາ ນະວັນທີ 31 ທັນວາ 2017, ຜົນປະກອບການທາງການເງິນ, ໃບລາຍງານສ່ວນປ່ຽນແປງຂອງທຶນ ແລະ ຄັງສຳຮອງອື່ນໆ ແລະ ໃບລາຍງານກະແສເງິນສົດ ສຳລັບປີການບັນຊີສິ້ນສຸດ ແມ່ນສອດຄ່ອງກັບລະບຽບການບັນຊີຂອງ ທະນາຄານ ແຫ່ງ ສປປ ລາວ ແລະ ຫຼັກການບັນຊີໃນ ສປປ ລາວ.

*ເຊັນຕາງໜ້າຄະນະຜູ້ບໍລິຫານ*




ທ່ານ ລູ ຈ້ຽນ
ຜູ້ອຳນວຍການ
ວັນທີ: 27 ມີນາ 2018


Industrial and Commercial Bank of China LTD. VIENTIANE BRANCH P.O.BOX：7302,Vientiane Capital,Lao PDR.
Tel：00856-21-258888 Ext：8019 Fax：00856-21-258889 Website: www.icbc.com.la Email: icbcvte@la.icbc.com.cn

KPMG Lao Co.,Ltd.
3rd - 4th Floor, 37 K.P. Tower
23 Singha Road, Ban Phonexay,
Saysettha District, P.O. Box 6978
Vientiane Capital, Lao PDR
Tel +856 (21) 454240-7

ບໍລິສັດ ເຄພີເອັມຈີລາວ ຈຳກັດ
ຊັ້ນ 3-4, 37 ຕຶກ ເຄພີທາວເວີ
ຖະໜົນ 23 ສິງຫາ, ບ້ານໂພນໄຊ,
ເມືອງໄຊເສດຖາ, ຕູ້ ປ.ນ. 6978,
ນະຄອນຫຼວງວຽງຈັນ, ສປປ ລາວ
ໂທ : +856 (21) 454240-7

## ບົດລາຍງານຂອງຜູ້ກວດສອບບັນຊີອິດສະລະ

### ເຖິງ: ຄະນະຜູ້ບໍລິຫານ ທະນາຄານ ອຸດສາຫະກຳ ແລະ ການຄ້າຈີນ ຈຳກັດ
### ສາຂາ ນະຄອນຫຼວງວຽງຈັນ.

*ຄຳເຫັນ*

ພວກຂ້າພະເຈົ້າໄດ້ດຳເນີນການກວດສອບ ເອກະສານລາຍງານການເງິນ ຂອງທະນາຄານ ອຸດສາຫະກຳ ແລະ ການຄ້າຈີນຈຳກັດ ສາຂາ ນະຄອນຫຼວງວຽງຈັນ ("ສາຂາ"), ເຊິ່ງປະກອບມີ ໃບລາຍງານຖານະການເງິນ ນະ ວັນທີ 31 ທັນວາ 2017, ໃບລາຍງານຜົນການດຳເນີນງານ, ສ່ວນປ່ຽນແປງຂອງທຶນ ແລະ ຄັງສຳຮອງອື່ນໆ ແລະ ກະແສເງິນສົດ ສຳລັບປີການບັນຊີສິ້ນສຸດ ແລະ ບົດອະທິບາຍ ຊຶ່ງປະກອບດ້ວຍສັງລວມນະໂຍບາຍການ ບັນຊີທີ່ສຳຄັນ ແລະ ບົດອະທິບາຍແບບເພີ່ມເຕີມອື່ນໆ.

ໃນຄວາມຄິດເຫັນຂອງພວກຂ້າພະເຈົ້າ, ເອກະສານລາຍງານການເງິນ ແມ່ນໄດ້ນຳສະເໜີຢ່າງສົມເຫດສົມຜົນ ໃນທຸກສາລະສຳຄັນ, ໃບລາຍງານຖານະການເງິນ ຂອງສາຂານະວັນທີ 31 ທັນວາ 2017 ແລະ ຜົນການດຳເນີນ ງານທາງດ້ານການເງິນ ແລະ ກະແສເງິນສົດ ສຳລັບປີການບັນຊີສິ້ນສຸດ ແມ່ນສອດຄ່ອງກັບນະໂຍບາຍການບັນຊີ ທີ່ໄດ້ອະທິບາຍໄວ້ໃນໝາຍເຫດ 2 ແລະ 3 ຂອງເອກະສານລາຍງານການເງິນ.

*ພື້ນຖານການສະແດງຄວາມເຫັນ*

ພວກຂ້າພະເຈົ້າໄດ້ດຳເນີນການກວດສອບ ຕາມມາດຕະຖານການກວດສອບບັນຊີສາກົນ ("ISAs"). ຄວາມ ຮັບຜິດຊອບຂອງພວກຂ້າພະເຈົ້າ ໄດ້ກ່າວໄວ້ໃນສ່ວນຂອງຄວາມຮັບຜິດຊອບຂອງຜູ້ກວດສອບບັນຊີ ຕໍ່ເອກະ ສານລາຍງານການເງິນ ໃນການລາຍງານຂອງພວກຂ້າພະເຈົ້າ. ພວກຂ້າພະເຈົ້າມີຄວາມເປັນອິດສະລະ ຈາກ ສາຂາຕາມຂໍ້ກຳນົດຈັນຍາບັນທີ່ກຳນົດ ໃນສ່ວນທີ່ກ່ຽວຂ້ອງກັບ ການກວດສອບບົດລາຍງານຖານະການເງິນ ແລະ ພວກຂ້າພະເຈົ້າໄດ້ປະຕິບັດຕາມຄວາມຮັບຜິດຊອບ ດ້ານຈັນຍາບັນອື່ນໆ ເຊິ່ງເປັນໄປຕາມຂໍ້ກຳນົດ ເຫຼົ່ານັ້ນ. ພວກຂ້າພະເຈົ້າເຊື່ອວ່າ ຫຼັກຖານການກວດສອບທີ່ພວກຂ້າພະເຈົ້າໄດ້ຮັບພຽງພໍ ແລະ ເໝາະສົມ ເພື່ອໃຊ້ເປັນເກນໃນການສະແດງຄວາມເຫັນ ຂອງພວກຂ້າພະເຈົ້າ.

KPMG Lao Co., Ltd. a Company licensed under the Foreign Investment Law of Lao PDR, is a member of KPMG International, a Swiss cooperative

KPMG

*ການເນັ້ນໜັກຄວາມເຫັນ*

ໂດຍບໍ່ສະແດງຄວາມເຫັນແບບມີເງື່ອນໄຂເພີ່ມເຕີມ, ພວກຂ້າພະເຈົ້າຂໍເນັ້ນໜັກໃນບົດອະທິບາຍ 2 (ກ) (i) ຂອງ ເອກະສານລາຍງານການເງິນສະບັບນີ້, ເຊິ່ງໄດ້ລະບຸວ່າ ເອກະສານລາຍງານການເງິນສະບັບນີ້ ແມ່ນບໍ່ມີເຈດຕະນາທີ່ຈະນຳສະເໜີຖານະການເງິນ ແລະ ຜົນຂອງການດຳເນີນງານ ແລະ ລາຍງານກະແສເງິນສົດ ຕາມຫຼັກການບັນຊີທີ່ຖືກຍອມຮັບໂດຍທົ່ວໄປ ໃນບັນດາປະເທດ ແລະ ຂົງເຂດອື່ນໆທີ່ນອກເໜືອ ຈາກ ສປປ ລາວ. ດັ່ງນັ້ນ, ເອກະສານລາຍງານການເງິນສະບັບນີ້ ບໍ່ໄດ້ຖືກອອກແບບສຳລັບຜູ້ທີ່ບໍ່ຮູ້ກ່ຽວກັບກົດໝາຍ ແລະ ຂໍ້ກຳນົດຂອງລາວ.

*ຄວາມຮັບຜິດຊອບຂອງຜູ້ບໍລິຫານຕໍ່ເອກະສານລາຍງານການເງິນ*

ຜູ້ບໍລິຫານມີໜ້າທີ່ຮັບຜິດຊອບໃນການກະກຽມ ແລະ ນຳສະເໜີບົດລາຍງານຖານະການເງິນທີ່ຖືກຕ້ອງຕາມມາດຕະ ຖານ ການລາຍງານການບັນຊີ ແລະ ການເງິນ ທີ່ຖືກຍອມຮັບໃນ ສປປ ລາວ ແລະ ສຳລັບການຄວບຄຸມພາຍໃນເຊັ່ນການກຳນົດການຈັດການແມ່ນມີຄວາມຈຳເປັນ ເພື່ອໃຫ້ແນ່ໃຈວ່າການກະກຽມເອກະສານລາຍງານການເງິນແມ່ນປາສະຈາກຂໍ້ຜິດພາດ, ບໍ່ວ່າຈະເປັນອັນເນື່ອງມາຈາກການສໍ້ໂກງ ຫຼື ຂໍ້ຜິດພາດ.

ໃນການກະກຽມເອກະສານລາຍງານການເງິນ, ຜູ້ບໍລິຫານມີຄວາມຮັບຜິດຊອບການປະເມີນຄວາມສາມາດຂອງສາຂາ ໃນການດຳເນີນງານຕໍ່ເນື່ອງ, ການເປີດເຜີຍ, ຕາມຄວາມເໝາະສົມ, ເລື່ອງທີ່ກ່ຽວກັບການດຳເນີນງານຕໍ່ເນື່ອງ ແລະ ຫຼັກການບັນຊີແບບຕໍ່ເນື່ອງ ເວັ້ນເສຍແຕ່ຜູ້ບໍລິຫານ ມີຈຸດປະສົງທີ່ຈະເລີກ ຫຼື ຢຸດການດຳເນີນງານ ຫຼື ບໍ່ສາມາດດຳເນີນງານຕໍ່ເນື່ອງໄປໄດ້.

*ຄວາມຮັບຜິດຊອບຂອງຜູ້ກວດສອບບັນຊີ ຕໍ່ການກວດສອບເອກະສານລາຍງານການເງິນ*

ຈຸດປະສົງຂອງພວກຂ້າພະເຈົ້າ ເພື່ອໃຫ້ຄວາມເຊື່ອໝັ້ນຢ່າງສົມເຫດສົມຜົນ ວ່າເອກະສານລາຍງານການເງິນໂດຍລວມແມ່ນປາດສະຈາກຂໍ້ຜິດພາດທີ່ມີສາລະສຳຄັນບໍ່ວ່າຈະເປັນອັນເນື່ອງມາຈາກການສໍ້ໂກງ ຫຼື ຂໍ້ຜິດພາດ ແລະ ອອກລາຍງານຂອງ ຜູ້ກວດສອບບັນຊີ ເຊິ່ງລວມຄວາມເຫັນຂອງພວກຂ້າພະເຈົ້າ. ຄວາມເຊື່ອໝັ້ນຢ່າງສົມເຫດສົມຜົນ ຄືຄວາມເຊື່ອໝັ້ນໃນລະດັບສູງ ແຕ່ບໍ່ໄດ້ເປັນການຮັບປະກັນວ່າ ການດຳເນີນການກວດສອບຕາມມາດຕະຖານການກວດສອບສາກົນຈະສາມາດກວດສອບຂໍ້ຜິດພາດທີ່ມີສາລະສຳຄັນທີ່ມີຢູ່. ຂໍ້ຜິດພາດອາດເກີດຈາກການສໍ້ໂກງ ຫຼື ຂໍ້ຜິດພາດ ແລະ ຖືວ່າມີສາລະສຳຄັນ ຖ້າແຕ່ລະລາຍການ ຫຼື ລາຍການລວມກັນ, ພວກມັນອາດມີຜົນຕໍ່ການຕັດສິນໃຈທາງເສດຖະກິດຂອງຜູ້ໃຊ້ ເອກະສານລາຍງານການເງິນເຫຼົ່ານີ້ເປັນພື້ນຖານ.

KPMG Lao Co., Ltd. a Company licensed under the Foreign Investment Law of Lao PDR, is a member of KPMG International, a Swiss cooperative

KPMG

ໃນສ່ວນການກວດສອບຕາມມາດຕະຖານການກວດສອບ, ພວກຂ້າພະເຈົ້າໄດ້ໃຊ້ການພິຈາລະນາທາງດ້ານວິຊາຊີບ ແລະ ສົງໄສຢ່າງຜູ້ປະກອບວິຊາຊີບຕະຫຼອດການກວດສອບ. ພວກຂ້າພະເຈົ້າ ຍັງໄດ້:

- ກຳນົດ ແລະ ປະເມີນຄວາມສ່ຽງຈາກການສະແດງຂໍ້ມູນທີ່ຂັດຕໍ່ຂໍ້ເທັດຈິງ ອັນເປັນສາລະສຳຄັນ ໃນເອກະສານລາຍງານການເງິນ, ບໍ່ວ່າຈະເກີດຈາກການສໍ້ໂກງ ຫຼື ຂໍ້ຜິດພາດ, ໃນການອອກແບບ ແລະ ປະຕິບັດຕາມຂັ້ນຂອງການກວດສອບເພື່ອຮັບມືກັບຄວາມສ່ຽງເຫຼົ່ານັ້ນ ແລະ ໄດ້ຮັບຫຼັກຖານໃນການກວດສອບບັນຊີທີ່ພຽງພໍ ແລະ ເໝາະສົມເພື່ອເປັນເກນໃນການສະແດງ ຄວາມເຫັນຂອງພວກຂ້າພະເຈົ້າ. ຄວາມສ່ຽງຂອງການກວດສອບບໍ່ພົບຂໍ້ຜິດພາດທີ່ມີສາລະສຳຄັນທີ່ເກີດຈາກການສໍ້ໂກງສູງກວ່າຂໍ້ຜິດພາດທີ່ເນື່ອງມາຈາກການສໍ້ໂກງອາດຈະກ່ຽວກັບການສົມຮູ້ຮ່ວມຄິດ, ການປອມແປງເອກະສານຫຼັກຖານ, ລະເລີຍໂດຍເຈດຕະນາ ບິດເບືອນຈາກຄວາມຈິງ ຫຼື ການແຊກແຊງການຄວບຄຸມພາຍໃນ.

- ທຳຄວາມເຂົ້າໃຈຕໍ່ການຄວບຄຸມພາຍໃນທີ່ກ່ຽວຂ້ອງກັບການກວດສອບໃນການອອກແບບຂັ້ນຕອນການກວດສອບທີ່ມີ ຄວາມເໝາະສົມຕາມສະຖານະການ, ແຕ່ບໍ່ແມ່ນສຳລັບຈຸດປະສົງຂອງການສະແດງຄວາມເຫັນກ່ຽວກັບປະສິດທິຜົນຂອງການຄວບຄຸມພາຍໃນຂອງສາຂາໄດ້.

- ປະເມີນຄວາມເໝາະສົມຂອງນະໂຍບາຍການບັນຊີການນຳໃຊ້ ແລະ ຄວາມສົມເຫດສົມຜົນຂອງການປະເມີນ ການບັນຊີ ແລະ ເປີດເຜີຍຂໍ້ມູນທີ່ກ່ຽວຂ້ອງທີ່ເຮັດໂດຍຜູ້ບໍລິຫານ.

- ສະຫຼຸບກ່ຽວກັບຄວາມເໝາະສົມຂອງຫຼັກການບັນຊີທີ່ນຳໃຊ້ ສຳລັບການດຳເນີນງານຕໍ່ເນື່ອງຂອງຜູ້ບໍລິຫານ ແລະ ຈາກຫຼັກຖານການກວດສອບທີ່ໄດ້ຮັບ, ສະຫຼຸບວ່າມີຄວາມບໍ່ແນ່ນອນທີ່ມີສາລະສຳຄັນກ່ຽວກັບເຫດການ ຫຼື ສະຖານະການທີ່ອາດເປັນເຫດໃຫ້ເກີດຂໍ້ສົງໄສຢ່າງມີສາລະສຳຄັນ ຕໍ່ຄວາມສາມາດຂອງສາຂາໃນການດຳເນີນງານຕໍ່ເນື່ອງ. ຖ້າຫາກວ່າພວກຂ້າພະເຈົ້າໄດ້ຂໍ້ສະຫຼຸບວ່າມີຄວາມບໍ່ແນ່ນອນທີ່ມີສາລະສຳຄັນ, ພວກຂ້າພະເຈົ້າຕ້ອງໄດ້ກ່າວໄວ້ໃນບົດລາຍງານຂອງຜູ້ກວດສອບບັນຊີອິດສະລະ ເຖິງການເປີດເຜີຍຂໍ້ມູນທີ່ກ່ຽວຂ້ອງ ໃນບົດລາຍງານຖານະການເງິນ ຫຼື ຖ້າການເປີດເຜີຍດັ່ງກ່າວບໍ່ພຽງພໍ ຄວາມເຫັນຂອງພວກຂ້າພະເຈົ້າຈະປ່ຽນໄປ, ພວກຂ້າພະເຈົ້າສະຫຼຸບແມ່ນອີງໃສ່ຫຼັກຖານການກວດສອບທີ່ໄດ້ຮັບເຖິງວັນທີຂອງບົດລາຍງານ. ຢ່າງໃດກໍຕາມ, ເຫດການ ຫຼື ເງື່ອນໄຂໃນອະນາຄົດອາດຈະເຮັດໃຫ້ສາຂາຢຸດການດຳເນີນງານຕໍ່ເນື່ອງ

- ການປະເມີນຜົນການນຳສະເໜີໂດຍລວມ, ໂຄງປະກອບ ແລະ ເນື້ອໃນ ຂອງເອກະສານລາຍງານການເງິນ ລວມທັງການເປີດເຜີຍຂໍ້ມູນ ແລະ ການນຳສະເໜີເອກະສານລາຍງານການເງິນ, ການສະແດງລາຍການ ແລະ ເຫດການໃນຮູບແບບທີ່ເຮັດໃຫ້ມີການນຳສະເໜີຂໍ້ມູນໂດຍຖືກຕ້ອງຕາມທີ່ຄວນ.

KPMG

ພວກຂ້າພະເຈົ້າຕິດຕໍ່ກັບຜູ້ບໍລິຫານກ່ຽວກັບໃນເລື່ອງອື່ນໆ, ຂອບເຂດການວາງແຜນ ແລະ ກຳນົດເວລາໃນການກວດສອບຕາມທີ່ໄດ້ວາງແຜນໄວ້ ປະເດັນທີ່ສາລະສຳຄັນ, ລວມເຖິງຂໍ້ບົກຜ່ອງທີ່ມີສາລະສຳຄັນໃນລະບົບການຄວບຄຸມພາຍໃນທີ່ພວກຂ້າພະເຈົ້າອາດກວດພົບ ໃນລະຫວ່າງການກວດສອບຂອງພວກຂ້າພະເຈົ້າ.

KPMG Lao Co., Ltd

ບໍລິສັດ ເຄພີເອັມຈີ ລາວ ຈຳກັດ

ນະຄອນຫຼວງວຽງຈັນ, ສປປ ລາວ

ວັນທີ: 27 ມີນາ 2018

ທະນາຄານ ອຸດສາຫະກຳ ແລະ ການຄ້າຈີນ ຈຳກັດ ສາຂາ ນະຄອນຫຼວງວຽງຈັນ
ໃບລາຍງານຖານະການເງິນ
ນະວັນທີ 31 ທັນວາ 2017

| | ບົດ ອະທິບາຍ | 2017 ກີບ | 2016 ກີບ |
|---|---|---|---|
| **ຊັບສິນ** | | | |
| ເງິນສົດ | *4* | 111.708.236.048 | 94.719.941.165 |
| ທຸລະກຳລະຫວ່າງທະນາຄານ ແລະ ຕະຫຼາດ | | | |
| ເງິນໜີ້ຕ້ອງຮັບຈາກສຳນັກງານໃຫຍ່ ແລະ ສາຂາອື່ນ | *25(ກ)* | 828.518.533.681 | 2.950.238.517.199 |
| ໜີ້ຕ້ອງຮັບຈາກທະນາຄານອື່ນ | *5* | 11.613.146.039.799 | 7.173.398.313.935 |
| ເງິນຝາກຕາມລະບຽບການກັບທະນາຄານກາງ | *6* | 397.462.303.646 | 347.068.803.468 |
| ເງິນລົງທຶນ | *7* | 3.187.257.862.004 | 3.228.516.429.594 |
| ເງິນໃຫ້ກູ້ຢືມ ແລະ ເງິນລ່ວງໜ້າ | *8* | 2.633.467.809.531 | 7.958.528.802.432 |
| ການສານອະນຸພັນຊັບສິນທາງການເງິນ | *9* | - | 91.879.015.327 |
| ຊັບສິນບັດຄົງທີ່ມີຕົວຕົນ | *10* | 138.445.495.671 | 148.122.230.027 |
| ຊັບສິນບັດຄົງທີ່ບໍ່ມີຕົວຕົນ | *11* | 49.129.051.420 | 49.607.147.184 |
| ຊັບສິນອາກອນເຍື້ອນຊຳລະ | *12* | 24.195.083.609 | 4.028.930.670 |
| ຊັບສິນອື່ນໆ | *13* | 260.348.808.398 | 137.972.344.310 |
| ລວມຍອດຊັບສິນ | | 19.243.679.223.807 | 22.184.080.475.311 |

ບົດອະທິບາຍປະກອບເອກະສານລາຍງານການເງິນ ເປັນສ່ວນໜຶ່ງຂອງເອກະສານລາຍງານສະບັບນີ້.

ກະກຽມໂດຍ:

ຫົວໜ້າບັນຊີ

ອະນຸມັດໂດຍ:

ທະນາຄານ ອຸດສາຫະກຳ ແລະ ການຄ້າຈີນ ຈຳກັດ ສາຂານະຄອນຫຼວງວຽງຈັນ(ໄອຊີບີຊີ)
Industrial and Commercial Bank of China Limited Vientiane Branch (ICBC)

ຜູ້ອຳນວຍການ
LU JIAN

ທະນາຄານ ອຸດສາຫະກຳ ແລະ ການຄ້າຈີນ ຈຳກັດ ສາຂາ ນະຄອນຫຼວງວຽງຈັນ
ໃບລາຍງານຖານະການເງິນ
ນະວັນທີ 31 ທັນວາ 2017

| | ບົດ ອະທິບາຍ | 2017 ກີບ | 2016 ກີບ |
|---|---|---|---|
| <u>ໜີ້ສິນ ແລະ ທຶນ</u> | | | |
| ໜີ້ສິນ | | | |
| ເງິນຝາກຈາກລູກຄ້າ | *14* | 4.740.772.715.647 | 3.865.566.033.459 |
| ທຸລະກຳລະຫວ່າງທະນາຄານ ແລະ ຕະຫຼາດເງິນ | | | |
| ໜີ້ຕ້ອງສົ່ງໃຫ້ສາຂາອື່ນ | *25(ກ)* | 12.865.992.915.201 | 17.514.477.153.244 |
| ໜີ້ຕ້ອງສົ່ງໃຫ້ທະນາຄານອື່ນ | *15* | 764.726.657.723 | 162.526.608.964 |
| ໜີ້ສິນທາງອາກອນ | *16* | 16.315.522.105 | 11.600.646.520 |
| ການສານອະນຸພັນໜີ້ສິນທາງການເງິນ | *17* | - | 80.911.110.938 |
| ໜີ້ສິນອື່ນໆ | *18* | 188.586.996.424 | 120.494.284.186 |
| **ລວມຍອດໜີ້ສິນ** | | **18.576.394.807.100** | **21.755.575.837.311** |
| ທຶນ | | | |
| ທຶນປະກອບສ່ວນຈາກສຳນັກງານໃຫຍ່ | *19* | 239.970.000.000 | 239.970.000.000 |
| ເງິນແຮທົ່ວໄປ | | 100.812.848.369 | 15.843.287.617 |
| ຄັງແຮສຳຮອງຕາມລະບຽບການ | *20* | 57.537.228.174 | 35.581.061.318 |
| ກຳໄລສະສົມ | | 268.964.340.164 | 137.110.289.065 |
| **ລວມຍອດທຶນ** | | **667.284.416.707** | **428.504.638.000** |
| **ລວມຍອດໜີ້ສິນ ແລະ ທຶນ** | | **19.243.679.223.807** | **22.184.080.475.311** |

ບົດອະທິບາຍປະກອບເອກະສານລາຍງານການເງິນ ເປັນສ່ວນໜຶ່ງຂອງເອກະສານລາຍງານສະບັບນີ້.

ກະກຽມໂດຍ:

ຫົວໜ້າບັນຊີ

ອະນຸມັດໂດຍ:

ຜູ້ອຳນວຍການ

LU JIAN

ທະນາຄານ ອຸດສາຫະກຳ ແລະ ການຄ້າຈີນ ຈຳກັດ ສາຂາ ນະຄອນຫຼວງວຽງຈັນ
ໃບລາຍງານຜົນໄດ້ຮັບ
ສຳລັບປີການບັນຊີສິ້ນສຸດ ວັນທີ 31 ທັນວາ 2017

| | ບົດ ອະທິບາຍ | 2017 ກີບ | 2016 ກີບ |
|---|---|---|---|
| **ລາຍຮັບຈາກດອກເບ້ຍ** | | | |
| ດອກເບ້ຍຈາກເງິນໃຫ້ກູ້ຢືມ ແລະ ເງິນລ່ວງໜ້າ | | 269.582.371.547 | 111.200.212.108 |
| ດອກເບ້ຍຈາກທຸລະກຳລະຫວ່າງທະນາຄານ ແລະ ຕະຫຼາດເງິນ | | 414.167.185.752 | 167.089.074.436 |
| ດອກເບ້ຍຈາກການລົງທຶນຊື້ພັນທະບັດ | | 181.860.542.000 | 160.420.492.504 |
| ລວມລາຍຮັບດອກເບ້ຍ | | 865.610.099.299 | 438.709.779.048 |
| **ລາຍຈ່າຍດອກເບ້ຍ** | | | |
| ດອກເບ້ຍເງິນຝາກ | | (31.415.774.030) | (30.150.709.911) |
| ດອກເບ້ຍຈາກທຸລະກຳລະຫວ່າງ ທະນາຄານ ແລະ ຕະຫຼາດເງິນ | | (474.115.664.116) | (249.657.831.979) |
| ລວມລາຍຈ່າຍດອກເບ້ຍ | 21 | (505.531.438.146) | (279.808.541.890) |
| ລາຍຮັບດອກເບ້ຍສຸດທິ | | 360.078.661.153 | 158.901.237.158 |
| ເງິນແຮທັກໄວ້ຕາມຂໍ້ກຳນົດ | | (83.717.193.441) | (9.704.507.532) |
| ລາຍຮັບດອກເບ້ຍ ສຸດທິ ຫຼັງຈາກທັກເງິນແຮ ຕາມຂໍ້ກຳນົດ | | 276.361.467.712 | 149.196.729.626 |
| **ລາຍຮັບອື່ນໆ** | | | |
| ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການສຸດທິ | | 18.469.277.107 | 4.954.758.829 |
| ກຳໄລຈາກການແລກປ່ຽນເງິນຕາ | | 60.675.537.354 | 78.967.041.905 |
| ລາຍຮັບອື່ນໆ | | 1.962.717.055 | 1.285.138.356 |
| ລວມລາຍຮັບອື່ນໆ | 22 | 81.107.531.516 | 85.206.939.090 |
| ລາຍຮັບກ່ອນຫັກລາຍຈ່າຍທີ່ບໍ່ແມ່ນດອກເບ້ຍ ແລະ ອາກອນກຳໄລ | | 357.468.999.228 | 234.403.668.716 |

ທະນາຄານ ອຸດສາຫະກຳ ແລະ ການຄ້າຈີນ ຈຳກັດ ສາຂາ ນະຄອນຫຼວງວຽງຈັນ
ໃບລາຍງານຜົນໄດ້ຮັບ
ສຳລັບປີການບັນຊີສິ້ນສຸດ ວັນທີ 31 ທັນວາ 2017

| | ບົດ ອະທິບາຍ | 2017 ກີບ | 2016 ກີບ |
|---|---|---|---|
| ລາຍຈ່າຍດຳເນີນທຸລະກິດ | | | |
| ລາຍຈ່າຍບຸກຄະລາກອນ | | (40.341.482.147) | (35.873.381.164) |
| ລາຍຈ່າຍຄ່າຫຼຸ້ຍຫ້ຽນ ແລະ ຄ່າເສື່ອມ | | (11.217.792.473) | (18.104.654.350) |
| ລາຍຈ່າຍອື່ນໆ | | (13.416.644.288) | (12.291.095.433) |
| | | (64.975.918.908) | (66.269.130.947) |
| **ກຳໄລກ່ອນເສຍອາກອນກຳໄລ** | | **292.493.080.320** | **168.134.537.769** |
| ອາກອນກຳໄລ | 23 | (72.894.652.024) | (40.557.456.383) |
| **ກຳໄລໃນປີ** | | **219.598.428.296** | **127.577.081.386** |

ບົດອະທິບາຍປະກອບເອກະສານລາຍງານການເງິນ ເປັນສ່ວນໜຶ່ງຂອງເອກະສານລາຍງານສະບັບນີ້.

ກະກຽມໂດຍ:

ຫົວໜ້າບັນຊີ

ອະນຸມັດໂດຍ:

ຜູ້ອຳນວຍການ

**LU JIAN**

ທະນາຄານ ອຸດສາຫະກຳ ແລະ ການຄ້າຈີນ ຈຳກັດ ສາຂາ ນະຄອນຫຼວງວຽງຈັນ
ໃບລາຍງານສ່ວນປ່ຽນແປງທຶນ
**ສຳລັບປີການບັນຊີສິ້ນສຸດ ວັນທີ 31 ທັນວາ 2017**

| | ທຶນປະກອບສ່ວນຈາກສຳນັກງານໃຫຍ່<br>ກີບ | ເງິນແຮທົ່ວໄປ<br>ກີບ | ຄັງແຮສຳຮອງຕາມລະບຽບການ<br>ກີບ | ກຳໄລສະສົມ<br>ກີບ | ລວມ<br>ກີບ |
|---|---|---|---|---|---|
| **ຍອດເຫຼືອໃນວັນທີ 1 ມັງກອນ 2016** | 239.970.000.000 | 6.302.244.056 | 22.826.058.656 | 99.972.976.743 | 369.071.279.455 |
| ສ່ວນປ່ຽນແປງຂອງເງິນແຮທົ່ວໄປ | - | 9.541.043.561 | - | - | 9.541.043.561 |
| ກຳໄລໃນປີ | - | - | - | 127.577.081.386 | 127.577.081.386 |
| ຄັງແຮສຳຮອງຕາມລະບຽບການໃນປີ | - | - | 12.755.002.662 | (12.755.002.662) | - |
| ການຈັດສັນຜົນກຳໄລ | - | - | - | (77.684.766.402) | (77.684.766.402) |
| **ຍອດເຫຼືອວັນທີ 31 ທັນວາ 2016 ແລະ ວັນທີ 1 ມັງກອນ 2017** | 239.970.000.000 | 15.843.287.617 | 35.581.061.318 | 137.110.289.065 | 428.504.638.000 |
| ສ່ວນປ່ຽນແປງຂອງເງິນແຮທົ່ວໄປ | - | 84.969.560.752 | - | - | 84.969.560.752 |
| ກຳໄລໃນປີ | - | - | - | 219.598.428.296 | 219.598.428.296 |
| ຄັງແຮສຳຮອງຕາມລະບຽບການໃນປີ | - | - | 21.956.166.856 | (21.956.166.856) | - |
| ການຈັດສັນຜົນກຳໄລ | - | - | - | (65.788.210.341) | (65.788.210.341) |
| **ຍອດເຫຼືອໃນວັນທີ 31 ທັນວາ 2017** | 239.970.000.000 | 100.812.848.369 | 57.537.228.174 | 268.964.340.164 | 667.284.416.707 |

ບົດອະທິບາຍປະກອບເອກະສານລາຍງານການເງິນ ເປັນສ່ວນໜຶ່ງຂອງເອກະສານລາຍງານສະບັບນີ້.

ກະກຽມໂດຍ:

ຫົວໜ້າບັນຊີ

ອະນຸມັດໂດຍ:

ຜູ້ອຳນວຍການ

U JIAN

LU JIAN

## ທະນາຄານ ອຸດສາຫະກຳ ແລະ ການຄ້າຈີນ ຈຳກັດ ສາຂາ ນະຄອນຫຼວງວຽງຈັນ
## ໃບລາຍງານກະແສເງິນສົດ
## ສຳລັບປີການບັນຊີສິ້ນສຸດ ວັນທີ 31 ທັນວາ 2017

| | ບົດ ອະທິບາຍ | 2017 ກີບ | 2016 ກີບ |
|---|---|---|---|
| ກະແສເງິນສົດຈາກການດຳເນີນທຸລະກິດ | | | |
| ກຳໄລກ່ອນຫັກອາກອນ | | 219.598.428.296 | 127.577.081.386 |
| *ການດັດແກ້ສຳລັບ:* | | | |
| ເງິນແຮຕາມຂໍ້ກຳນົດ | | 83.717.193.441 | 9.704.507.532 |
| ຄ່າຫຼຸ້ຍຫ້ຽນ ແລະ ຄ່າເສື່ອມ | | 11.217.792.473 | 18.104.654.350 |
| ລາຍຮັບດອກເບ້ຍຈາກການລົງທຶນໃນພັນທະບັດ | | (181.860.542.000) | (160.420.492.504) |
| ຂາດທຶນມູນຄ່າຍຸຕິທຳ ໃນກາສານອະນຸພັນ ຊັບສິນ ແລະ ໜີ້ສິນທາງການເງິນ | | 10.967.904.389 | 6.369.138.191 |
| ລາຍຈ່າຍອາກອນກຳໄລ | | 72.894.652.024 | 40.557.456.383 |
| | | **216.535.428.623** | **41.892.345.338** |
| ປ່ຽນແປງໃນຊັບສິນ/ໜີ້ສິນໃນການດຳເນີນງານ | | | |
| ປ່ຽນແປງໃນຊັບສິນ ທຸລະກຳລະຫວ່າງທະນາຄານ ແລະ ຕະຫຼາດເງິນ | | 2.056.818.750.971 | (7.536.316.675.971) |
| ປ່ຽນແປງໃນເງິນຝາກຕາມລະບຽບການ | | (50.393.500.178) | (36.152.918.394) |
| ປ່ຽນແປງໃນເງິນໃຫ້ກູ້ຢືມ ແລະ ເງິນລ່ວງໜ້າໃຫ້ລູກຄ້າ | | 5.326.341.285.212 | (2.329.821.658.497) |
| ປ່ຽນແປງໃນກາສານອະນຸພັນ ຊັບສິນ ແລະ ໜີ້ສິນ ທາງການເງິນ | | - | 110.547.477 |
| ປ່ຽນແປງໃນຊັບສິນອື່ນໆ | | (122.376.464.088) | (96.294.460.362) |
| ປ່ຽນແປງໃນເງິນຝາກຂອງລູກຄ້າ | | 875.206.682.188 | 576.921.310.076 |
| ປ່ຽນແປງໃນໜີ້ສິນ ທຸລະກຳລະຫວ່າງທະນາຄານ ແລະ ຕະຫຼາດເງິນ | | (4.046.284.189.284) | 6.354.299.611.094 |
| ປ່ຽນແປງໃນໜີ້ສິນທາງອາກອນ | | 530.782.816 | (1.095.813.803) |
| ປ່ຽນແປງໃນໜີ້ສິນອື່ນໆ | | 68.092.712.238 | 62.020.502.600 |
| ລາຍຈ່າຍອາກອນກຳໄລ | | (88.876.712.194) | (44.537.261.495) |
| ເງິນສົດສຸດທິ(ທີ່ໃຊ້)ເຂົ້າໃນການດຳເນີນງານ | | **4.235.594.776.304** | **(3.008.974.471.937)** |

ທະນາຄານ ອຸດສາຫະກຳ ແລະ ການຄ້າຈີນ ຈຳກັດ ສາຂາ ນະຄອນຫຼວງວຽງຈັນ

ໃບລາຍງານກະແສເງິນສົດ

ສຳລັບປີການບັນຊີສິ້ນສຸດ ວັນທີ 31 ທັນວາ 2017

| | ບົດ ອະທິບາຍ | 2017 ກີບ | 2016 ກີບ |
|---|---|---|---|
| **ກະແສເງິນສົດຈາກກິດຈະກຳການລົງທຶນ** | | | |
| ຊື້ຊັບສົມບັດຄົງທີ່ມີຕົວຕົນ | | (931.310.353) | (402.906.600) |
| ຊື້ຊັບສົມບັດຄົງທີ່ບໍ່ມີຕົວຕົນ | | (131.652.000) | - |
| ລົງທຶນໃນການຊື້ພັນທະບັດ | | (328.220.000.000) | (1.281.244.648.571) |
| ເງິນໄດ້ຮັບຈາກການຂາຍ ແລະ ການຖອນເງິນ ລົງທຶນໃນພັນທະບັດ | | 372.934.000.000 | 479.395.469.249 |
| ລາຍຮັບດອກເບ້ຍຈາກການລົງທຶນໃນ ພັນທະບັດ | | 178.405.109.590 | 145.769.548.709 |
| **ເງິນສົດສຸດທິ(ທີ່ໃຊ້)ໃນກິດຈະການລົງທຶນ** | | **222.056.147.237** | **(656.482.537.213)** |
| **ກະແສເງິນສົດຈາກກິດຈະກຳທາງການເງິນ** | | | |
| ລາຍຈ່າຍປັນຜົນກຳໄລ | | (65.788.210.341) | (77.684.766.402) |
| ເງິນສົດສຸດທິທີ່ໃຊ້ໃນກິດຈະກຳທາງການເງິນ | | (65.788.210.341) | (77.684.766.402) |
| ປ່ຽນແປງໃນເງິນສົດ ແລະ ທຽບເທົ່າເງິນສົດ ສຸດທິ | | 4.391.862.713.200 | (3.743.141.775.552) |
| ເງິນສົດ ແລະ ທຽບເທົ່າເງິນສົດ ໃນວັນທີ 1 ມັງກອນ | | 2.682.040.096.328 | 6.425.181.871.880 |
| ເງິນສົດ ແລະ ທຽບເທົ່າເງິນສົດ ໃນວັນທີ 31 ທັນວາ | *24* | 7.073.902.809.528 | 2.682.040.096.328 |

ບົດອະທິບາຍປະກອບເອກະສານລາຍງານການເງິນ ເປັນສ່ວນໜຶ່ງຂອງເອກະສານລາຍງານສະບັບນີ້.

ກະກຽມໂດຍ: ອະນຸມັດໂດຍ:

ຫົວໜ້າບັນຊີ

ຜູ້ອຳນວຍການ

LU JIAN

## 1. ທະນາຄານ ແລະ ກິດຈະກຳຫຼັກ

ທະນາຄານ ອຸດສາຫະກຳ ແລະ ການຄ້າຈີນ ຈຳກັດ ສາຂາ ນະຄອນຫຼວງວຽງຈັນ ("ສາຂາ") ເປັນສາຂາຂອງ ທະນາຄານ ອຸດສາຫະກຳ ແລະ ການຄ້າຈີນ ຈຳກັດ ຊຶ່ງດຳເນີນທຸລະກິດຢູ່ໃນ ສປ ຈີນ. ສາຂາມີສຳນັກງານຕັ້ງຢູ່ ໜ່ວຍ 12, ຖະໜົນ ອາຊຽນ, ບ້ານ ສີບຸນເຮືອງ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ທີ່ດຳເນີນທຸລະກິດຢູ່ ໃນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ("ສປປລາວ"). ສາຂາໄດ້ເລີ່ມດຳເນີນທຸລະກິດໃນວັນທີ 28 ພະຈິກ 2011 ອີງຕາມໃບອະນຸຍາດລົງທຶນ ເລກທີ 180-11/ລທ3, ລົງວັນທີ 2 ສິງຫາ 2011. ເຊິ່ງໄດ້ຮັບການ ອະນຸຍາດຈາກ ທະນາຄານແຫ່ງ ສປປ ລາວ ("ທຫລ") ໃຫ້ດຳເນີນທຸລະກິດທະນາຄານ ພາຍໃຕ້ໃບອະນຸຍາດ ດຳເນີນທຸລະກິດທະນາຄານ ເລກທີ 18/ທຫລ, ລົງວັນທີ 08 ພຶດສະພາ 2015 ແລະ ໄດ້ມີການປ່ຽນແປງໃບ ອະນຸຍາດດຳເນີນທຸລະກິດທະນາຄານ ໃນເດືອນກໍລະກົດ 2015.

ການບໍລິການຫຼັກຂອງສາຂາ ແມ່ນເພື່ອໃຫ້ບໍລິການທາງດ້ານການເງິນ, ການຄ້າ ແລະ ໃຫ້ບໍລິການດ້ານທະນາຄານ ແກ່ນັກລົງທຶນຄົນລາວ, ຈີນ ແລະ ໄທ ແລະ ໃຫ້ບໍລິການດ້ານທະນາຄານແກ່ບຸກຄົນທົ່ວໄປ, ໃນວັນທີ 31 ທັນວາ 2017, ສາຂາມີພະນັກງານທັງໝົດ 92 ຄົນ (2016: 92 ຄົນ)

## 2. ພື້ນຖານຂອງການກະກຽມເອກະສານລາຍງານການເງິນ

### (ກ) ພື້ນຖານການບັນຊີທົ່ວໄປ

### *(i)* ພື້ນຖານໃນການກະກຽມ

ເອກະສານລາຍງານການເງິນ ໄດ້ກະກຽມເປັນຫົວໜ່ວຍລາວກີບ ("ກີບ") ເຊິ່ງເປັນສະກຸນເງິນຫຼັກຂອງສາຂາ. ເອກະສານລາຍງານການເງິນໄດ້ຖືກກະກຽມໃຫ້ສອດຄ່ອງກັບລະບຽບຫຼັກການບັນຊີຂອງທະນາຄານ ແຫ່ງ ສປປ ລາວ ແລະ ຫຼັກການບັນຊີໃນ ສປປລາວ, ເຊິ່ງອາດຈະແຕກຕ່າງຈາກການລາຍງານຕາມມາດຕະຖານການລາຍງານ ການເງິນແບບສາກົນ ແລະ ລະບຽບຫຼັກການບັນຊີທີ່ມີການຍອມຮັບ ແລະ ປະຕິບັດໃນປະເທດອື່ນໆ. ດັ່ງນັ້ນ, ເອກະສານລາຍງານການເງິນນີ້ບໍ່ມີຈຸດປະສົງທີ່ຈະສະແດງຖານະການເງິນ, ຜົນຂອງການດຳເນີນງານ, ການປ່ຽນ ແປງຂອງທຶນ, ກະແສເງິນສົດ ແລະ ບົດອະທິບາຍຊ້ອຍທ້າຍ ຕາມຫຼັກການບັນຊີທີ່ຖືກຍອມຮັບຕາມນະໂຍບາຍ ບັນຊີ ແລະ ການປະຕິບັດໂດຍທົ່ວໄປ ໃນບັນດາປະເທດ ແລະ ຂົງເຂດອື່ນໆ ທີ່ນອກເໜືອຈາກ ສປປ ລາວ. ນອກຈາກນີ້, ເອກະສານລາຍງານການເງິນສະບັບນີ້ ບໍ່ໄດ້ຖືກສ້າງຂຶ້ນໃຫ້ຜູ້ທີ່ບໍ່ຮູ້ກ່ຽວກັບນະໂຍບາຍບັນຊີ, ການ ດຳເນີນງານ ແລະ ການປະຕິບັດກົດໝາຍ ແລະ ຂໍ້ກຳນົດຂອງ ສປປ ລາວ.

ສາຂາ ແມ່ນເປັນພາກສ່ວນໜຶ່ງຂອງທະນາຄານ ອຸດສາຫະກຳ ແລະ ການຄ້າຈີນ ຈຳກັດ ແລະ ບໍ່ໄດ້ແຍກຕົວອອກ ຢ່າງເອກະລາດຈາກສຳນັກງານໃຫຍ່. ພາກສ່ວນໃນເອກະສານລາຍງານການເງິນສະບັບນີ້ ແມ່ນຖືກກະກຽມຈາກ ການບັນທຶກຂອງສາຂາ ແລະ ສະທ້ອນເຖິງທຸລະກຳ ທີ່ບັນທຶກຢູ່ໃນສາຂາເທົ່ານັ້ນ, ສາຂາມີລາຍການທຸລະກຳທີ່ ສຳຄັນ ແລະ ຍອດເຫຼືອກັບສຳນັກງານໃຫຍ່ ແລະ ສາຂາອື່ນ.

## 2. ພື້ນຖານຂອງການກະກຽມເອກະສານລາຍງານການເງິນ (ຕໍ່)

### (ກ) ພື້ນຖານການບັນຊີທົ່ວໄປ (ຕໍ່)

### *(i)* ພື້ນຖານໃນການກະກຽມ (ຕໍ່)

ເອກະສານລາຍງານການເງິນຂອງສາຂານີ້ ແມ່ນໄດ້ຖືກຮັບຮອງໂດຍຄະນະຜູ້ບໍລິຫານ ໃນວັນທີ 27 ມີນາ 2018.

### *(ii)* ພື້ນຖານການປະເມີນ

ເອກະສານລາຍງານການເງິນ ໄດ້ຖືກກະກຽມຂຶ້ນຕາມຫຼັກການຕົ້ນທຶນເດີມ ຍົກເວັ້ນແຕ່ທີ່ໄດ້ກ່າວໄວ້ໃນນະໂຍບາຍການບັນຊີ. ນະໂຍບາຍການບັນຊີແມ່ນໄດ້ຖືກນຳໃຊ້ຢ່າງສອດຄ່ອງກັບສາຂາ ແລະ ສອດຄ່ອງກັບຫຼັກການທີ່ໄດ້ນຳໃຊ້ໃນປີຜ່ານມາ.

### *(iii)* ການຄາດຄະເນ ແລະ ການພິຈາລະນາທາງບັນຊີ

ໃນການກະກຽມເອກະສານລາຍງານການເງິນຂອງສາຂາ, ຜູ້ບໍລິຫານຕ້ອງໄດ້ໃຊ້ດຸນພິນິດ, ການຄາດຄະເນ ແລະ ຂໍ້ສົມມຸດຕິຖານຫຼາຍປະການ ຕາມຄວາມຮູ້ເຂົ້າໃຈຂອງຄະນະຜູ້ບໍລິຫານຕໍ່ສະພາບປະຈຸບັນ ແລະ ການປະຕິບັດທີ່ມີຜົນກະທົບຕໍ່ການກຳນົດນະໂຍບາຍການບັນຊີ ແລະ ການລາຍງານຈຳນວນເງິນທີ່ກ່ຽວກັບ ຊັບສິນ, ໜີ້ສິນ, ລາຍຮັບ, ລາຍຈ່າຍ ແລະ ການເປີດເຜີຍໜີ້ສິນທີ່ອາດເກີດຂຶ້ນໃນວັນທີລາຍງານ.

ການຄາດຄະເນ ແລະ ການສົມມຸດຖານ ແມ່ນໄດ້ຖືກທົບທວນຄືນຢ່າງຕໍ່ເນື່ອງ, ຜົນໄດ້ຮັບທີ່ແທ້ຈິງອາດຈະແຕກຕ່າງຈາກການປະເມີນຂອງ ການບໍລິຫານ ແລະ ສ່ວນແຕກຕ່າງເຫຼົ່ານັ້ນ ອາດຈະມີຄວາມຈຳເປັນທີ່ຈະຕ້ອງມີການແກ້ໄຂທີ່ໃຫ້ເປັນທີ່ຍອມຮັບ ໄລຍະທີ່ການປະເມີນຖືກມີການແກ້ໄຂ ແລະ ໃນໄລຍະທີ່ຈະໄດ້ຮັບຜົນກະທົບ ໃນອະນາຄົດ.

### (ຂ) ລາຍການເຄື່ອນໄຫວຂອງສະກຸນເງິນຕາຕ່າງປະເທດ

ລາຍການເຄື່ອນໄຫວຂອງສະກຸນເງິນຕາຕ່າງປະເທດ ແມ່ນໄດ້ຖືກປ່ຽນເປັນສະກຸນເງິນຫຼັກ ໂດຍໃຊ້ອັດຕາແລກປ່ຽນໃນມື້ທີ່ລາຍການເຄື່ອນໄຫວດັ່ງກ່າວເກີດຂຶ້ນ.

ຊັບສິນ ແລະ ໜີ້ສິນທາງການເງິນ ທີ່ເປັນສະກຸນເງິນຕາຕ່າງປະເທດໃນມື້ລາຍງານ ແມ່ນໄດ້ແປງຄ່າເປັນສະກຸນເງິນຫຼັກໃນມື້ທີ່ລາຍການເຄື່ອນໄຫວດັ່ງກ່າວເກີດຂຶ້ນ. ສ່ວນແຕກຕ່າງຂອງອັດຕາແລກປ່ຽນທີ່ມີຕົວຕົນ ແລະ ບໍ່ມີຕົວຕົນ ແມ່ນໄດ້ຖືກບັນທຶກ ໃນໃບລາຍງານຜົນການດຳເນີນງານ.

ຊັບສິນ ແລະ ໜີ້ສິນ ທີ່ບໍ່ແມ່ນທາງການເງິນວັດແທກຈາກມູນຄ່າຕົ້ນທຶນໃນສະກຸນເງິນຕາຕ່າງປະເທດປ່ຽນມາເປັນສະກຸນເງິນຫຼັກໃນມື້ທີ່ລາຍການເຄື່ອນໄຫວດັ່ງກ່າວເກີດຂຶ້ນ.

## 2. ພື້ນຖານຂອງການກະກຽມເອກະສານລາຍງານການເງິນ (ຕໍ່)

(ຂ) ລາຍການເຄື່ອນໄຫວຂອງສະກຸນເງິນຕາຕ່າງປະເທດ (ຕໍ່)

ອັດຕາແລກປ່ຽນລະຫວ່າງເງິນກີບ ແລະ ເງິນຕາຕ່າງປະເທດມີຄື:

| | 31 ທັນວາ 2017 | 31 ທັນວາ 2016 |
|---|---|---|
| | ກີບ | ກີບ |
| ໂດລາສະຫະລັດ ("USD") | 8.274,00 | 8.165,00 |
| ບາດໄທ ("THB") | 253,97 | 229,14 |
| ຢວນຈີນ ("CNY") | 1.258,82 | 1.163,05 |
| ຢູໂຣ ("EUR") | 9.885,00 | 8.618,00 |
| ໂດລາຮ່ອງກົງ ("HKD") | 1.003,00 | 997,94 |
| ເຢນຍີ່ປຸ່ນ ("JPY") | 72,33 | 69,31 |

(ຄ) ປີການບັນຊີ

ປີການບັນຊີຂອງສາຂາ ແມ່ນເລີ່ມຈາກວັນທີ 1 ມັງກອນ ແລະ ສິ້ນສຸດ ນະວັນທີ 31 ທັນວາ.

## 3. ນະໂຍບາຍການບັນຊີທີ່ເປັນສາລະສຳຄັນ

ນະໂຍບາຍບັນຊີທີ່ເປັນສາລະສຳຄັນດັ່ງລຸ່ມນີ້ ແມ່ນສາຂາໄດ້ນຳໃຊ້ໃນການກະກຽມເອກະສານລາຍງານການເງິນ

(ກ) ເຄື່ອງມືທາງດ້ານການເງິນ

ຊັບສິນ ແລະ ໜີ້ສິນທາງການເງິນ ທີ່ສຳຄັນຂອງສາຂາລວມມີ ເງິນສົດ ແລະ ທຽບເທົ່າເງິນສົດ, ເງິນໃຫ້ກູ້, ແລະ ໜີ້ຕ້ອງຮັບ, ເງິນຝາກ, ການລົງທຶນ, ຍອດເຫຼືອທຸລະກຳລະຫວ່າງທະນາຄານ, ການສານອະນຸພັນ ແລະ ໜີ້ຕ້ອງຮັບ ແລະ ໜີ້ຕ້ອງສົ່ງອື່ນໆ. ນະໂຍບາຍການບັນຊີສຳລັບການຮັບຮູ້ ແລະ ການປະເມີນລາຍການເຫຼົ່ານີ້ ແມ່ນໄດ້ຖືກເປີດເຜີຍໄວ້ໃນບັນດານະໂຍບາຍການບັນຊີຕາມລຳດັບ.

(ຂ) ເງິນສົດ ແລະ ທຽບເທົ່າເງິນສົດ

ເງິນສົດ ແລະ ທຽບເທົ່າເງິນສົດປະກອບມີ ເງິນສົດ ແລະ ເງິນຝາກກັບທະນາຄານອື່ນ, ເງິນຝາກກະແສລາຍວັນ ແລະ ເງິນລົງທຶນໄລຍະສັ້ນ ທີ່ມີກຳນົດ 3 ເດືອນ ຫຼື ໜ້ອຍກວ່າ 3 ເດືອນ, ທີ່ສາມາດປ່ຽນເປັນເງິນໄດ້ ຫຼື ມີຄວາມສ່ຽງໃນການປ່ຽນຄ່າໜ້ອຍ.

## 3. ນະໂຍບາຍການບັນຊີທີ່ເປັນສາລະສຳຄັນ (ຕໍ່)

### (ຄ) ເງິນລົງທຶນ

ເງິນລົງທຶນປະກອບມີ ເງິນລົງທຶນຈາກການຊື້ພັນທະບັດ ແລະ ດອກເບ້ຍທີ່ຍັງບໍ່ທັນໄດ້ຮັບ, ເງິນລົງທຶນໃນການຊື້ພັນທະບັດທີ່ອອກໂດຍ ທຫລ ແມ່ນຖືກບັນທຶກຕາມມູນຄ່າຊື້. ລາຍຮັບດອກເບ້ຍທີ່ຍັງບໍ່ທັນໄດ້ຮັບຈາກການໄດ້ມາຂອງຫຼັກຊັບຄໍ້າປະກັນ ແມ່ນຫັກລົບກັບລາຍຮັບດອກເບ້ຍ ໃນແບບຄ້າງຮັບ.

ເງິນລົງທຶນອື່ນໆແມ່ນຖືກສະແດງດ້ວຍຕົ້ນທຶນ.

### (ງ) ການສານອະນຸພັນ

ການສານອະນຸພັນທາງການເງິນ ທີ່ໃຊ້ເພື່ອການຈັດການການນຳສະເໜີອັດຕາແລກປ່ຽນ, ອັດຕາດອກເບ້ຍເພີ່ມຂຶ້ນຈາກການດຳເນີນງານ, ການເງິນ ແລະ ກິດຈະກຳການລົງທຶນ.ການສານອະນຸພັນທາງການເງິນ ແມ່ນບໍ່ໄດ້ໃຊ້ເພື່ອຈຸດປະສົງການຄ້າ. ເຖິງຢ່າງໃດກໍ່ຕາມ, ການສານອະນຸພັນ ບໍ່ເໝາະສົມກັບການປ້ອງກັນບັນຊີ ແມ່ນຈະຖືກຄຳນວນເປັນເຄື່ອງມືທາງການຄ້າ.

ການສານອະນຸພັນ ຖືກຮັບຮູ້ເບື້ອງຕົ້ນໃນມູນຄ່າຍຸຕິທຳ; ລວມທັງ ລາຍຈ່າຍທີ່ເກີດຂຶ້ນຈາກທຸລະກຳ ຖືກຮັບຮູ້ເມື່ອມີກຳໄລ ຫຼື ຂາດທຶນເກີດຂຶ້ນ. ພາຍຫຼັງການຮັບຮູ້ໃນເບື້ອງຕົ້ນ, ລາຍການດັ່ງກ່າວໄດ້ຖືກວັດແທກເປັນມູນຄ່າຍຸຕິທຳ. ກຳໄລ ຫຼື ຂາດທຶນ ໃນເມື່ອມີການວັດແທກຄືນກັບມູນຄ່າຍຸຕິທຳ ແມ່ນຖືກຮັບຮູ້ທັນທີທັນໃດໃນກຳໄລ ຫຼື ຂາດທຶນ. ເຖິງຢ່າງໃດກໍ່ຕາມ, ການກຳນົດການສານອະນຸພັນ ເພື່ອປ້ອງກັນການບັນຊີ, ການຮັບຮູ້ຜົນກຳໄລ ຫຼື ຂາດທຶນໃດໆ ແມ່ນຂຶ້ນກັບລັກສະນະຂອງລາຍການທີ່ຖືກປ້ອງກັນ.

ມູນຄ່າຍຸຕິທຳຂອງການແລກປ່ຽນອັດຕາດອກເບ້ຍ ແລະ ອັດຕາການແລກປ່ຽນເງິນຕາຕ່າງປະເທດ ແມ່ນຈຳນວນທີ່ຖືກປະເມີນ ໂດຍສາຂາຈະໄດ້ຮັບ ຫຼື ຈ່າຍຕໍ່ການຍົກເລີກແລກປ່ຽນ ໃນວັນທີທີ່ລາຍງານ, ທຳການບັນທຶກເຂົ້າສູ່ບັນຊີອັດຕາດອກເບ້ຍ ຫຼື ອັດຕາການແລກປ່ຽນເງິນຕາຕ່າງປະເທດ.

### (ຈ) ເງິນໃຫ້ກູ້ຢືມ ແລະ ເງິນລ່ວງໜ້າ

ເງິນໃຫ້ກູ້ຢືມ ແລະ ເງິນລ່ວງໜ້າ ແມ່ນມູນຄ່າຕົວຈິງທີ່ສາຂາໄດ້ສະໜອງເງິນໃຫ້ແກ່ລູກຄ້າ ເພື່ອຈຸດປະສົງໃນການເກັບກຳໄລທີ່ບໍ່ແມ່ນໃນໄລຍະສັ້ນ. ການນຳສະເໜີຍອດຍັງເຫຼືອຂອງເງິນຕົ້ນທຶນ. ເງິນໃຫ້ກູ້ຢືມ ແລະ ເງິນລ່ວງໜ້າຍົກເວັ້ນເງິນເບີກເກີນບັນຊີ ຖືກສະແດງໂດຍບໍ່ລວມໜີ້ຕ້ອງຮັບດອກເບ້ຍຄ້າງຮັບ.

## 3. ນະໂຍບາຍການບັນຊີທີ່ເປັນສາລະສຳຄັນ (ຕໍ່)

### (ສ) ເງິນແຮໜີ້ຕ້ອງຮັບຈາກທະນາຄານອື່ນ ແລະ ເງິນໃຫ້ກູ້ຢືມ ແລະ ເງິນລ່ວງໜ້າ

ເພື່ອປະຕິບັດຕາມກົດລະບຽບຂອງ ທຫລ, ເງິນແຮຕ່ຳສຸດໂດຍສະເພາະໜີ້ສົງໄສເງິນໃຫ້ກູ້ຢືມ ແລະ ເງິນລ່ວງໜ້າ ແມ່ນໃຫ້ຕັ້ງໄວ້ສຳລັບເງິນໃຫ້ກູ້ຢືມ ແລະ ເງິນລ່ວງໜ້າທີ່ບໍ່ເກີດດອກອອກຜົນ. ນອກຈາກນັ້ນ, ເງິນແຮທົ່ວໄປໃຫ້ຄິດໄລ່ 0,5% ຫຼື 1% ແລະ 3%, ຕາມລຳດັບຂອງເງິນໃຫ້ກູ້ຢືມ ແລະ ເງິນລ່ວງໜ້າ ໃຫ້ລູກຄ້າສຳລັບຊັ້ນປົກກະຕິ ແລະ ຊັ້ນເອົາໃຈໃສ່ ທີ່ຍັງມີຍອດຄ້າງຊຳລະ (ເງິນກູ້ເກີດດອກອອກຜົນ) , ຊຶ່ງຮັກສາໂດຍສາຂາ ກັບຄວາມສ່ຽງບໍ່ສາມາດໄຈ້ແຍກໄດ້ໂດຍສະເພາະ.

| ການຈັດຊັ້ນໜີ້ | ຈຳນວນມື້ເກີນກຳນົດຈ່າຍ | ອັດຕາເງິນແຮ |
|---|---|---|
| ໜີ້ປົກກະຕິ (A) | 0 - 30 ວັນ ຫຼື ປັດໄຈອື່ນໆ | 0,5%/ 1% |
| ໜີ້ຄວນເອົາໃຈໃສ່ (B) | 30 - 89 ວັນ ຫຼື ປັດໄຈອື່ນໆ | 3% |
| ໜີ້ຕ່ຳກວ່າມາດຕະຖານ (C) | 90 - 179 ວັນ ຫຼື ປັດໄຈອື່ນໆ | 20% |
| ໜີ້ສົງໄສວ່າຈະສູນ (D) | 180 - 359 ວັນ ຫຼື ປັດໄຈອື່ນໆ | 50% |
| ໜີ້ສູນ(E) | ຫຼາຍກວ່າ 360 ວັນຂຶ້ນໄປ ຫຼື ປັດໄຈອື່ນໆ | 100% |

ອີງຕາມກົດລະບຽບການຂອງ ທຫລ ໃນປີ 2017, ສຳລັບໃນສ່ວນຂອງໜີ້ປົກກະຕິຂອງເງິນໃຫ້ກູ້ ແລະ ອື່ນໆ ຊຶ່ງຈັດຢູ່ໃນປະເພດຄວາມສ່ຽງຕ່ຳ ໂດຍ ທຫລ, ອະນຸຍາດໃຫ້ສຳຮອງເງິນແຮທົ່ວໄປຢູ່ໃນລະດັບ ຈາກ 0,5% ເຖິງ 1% ຂອງໜີ້ປົກກະຕິຂອງເງິນກູ້ ແລະ ອື່ນໆ ຄືກັບໜີ້ຕ້ອງຮັບຈາກທະນາຄານກາງ.

ການຮຽກເກັບຄືນສິນເຊື່ອທີ່ໄດ້ລ້າງອອກຈາກບັນຊີ ແລະ ການເກັບຄືນເງິນແຮ ແມ່ນໄດ້ເປີດເຜີຍເປັນການຫັກອອກຈາກເງິນແຮສຳລັບໜີ້ເສຍ ແລະ ໜີ້ສົງໄສ ໃນໃບລາຍງານຜົນການດຳເນີນງານ.

### (ຊ) ເງິນຝາກກັບທະນາຄານ

ເງິນຝາກກັບທະນາຄານອື່ນແມ່ນຖືກບັນທຶກຕາມມູນຄ່າຕົວຈິງ.

### (ຍ) ຊັບສິນບັດຄົງທີ່ມີຕົວຕົນ

ລາຍການຊັບສິນບັດຄົງທີ່ມີຕົວຕົນ ແມ່ນບັນທຶກຕາມມູນຄ່າຕົ້ນທຶນລົບໃຫ້ຄ່າຫຼຸ້ຍຫ້ຽນສະສົມ ແລະ ຂາດທຶນ ຄ່າເສື່ອມມູນຄ່າສະສົມ (ຖ້າມີ). ຖ້າຫາກລາຍການຂອງຊັບສິນບັດຄົງທີ່ມີຕົວຕົນ ມີຫຼາຍຊິ້ນສ່ວນທີ່ມີອາຍຸການໃຊ້ງານຕ່າງກັນ ແມ່ນໃຫ້ແຍກແຕ່ລະລາຍການຂອງຊັບສິນບັດຄົງທີ່ມີຕົວຕົນ.

## 3. ນະໂຍບາຍການບັນຊີທີ່ເປັນສາລະສຳຄັນ (ຕໍ່)

### (ຍ) ຊັບສິນບັດຄົງທີ່ມີຕົວຕົນ (ຕໍ່)

ຄ່າຫຼຸ້ຍຫ້ຽນຂອງຊັບສິນບັດຄົງທີ່ມີຕົວຕົນ ແມ່ນບັນທຶກໃນໃບລາຍງານຜົນການດຳເນີນງານ ໂດຍນຳໃຊ້ການຄິດໄລ່ແບບສະເໝີຕົວຕາມອາຍຸການໃຊ້ງານຂອງແຕ່ລະຊັບສິນນັ້ນໆ ໃນອັດຕາຕໍ່ປີດັ່ງລຸ່ມນີ້:

| | |
|---|---|
| ອາຄານ | 5% |
| ສ່ວນປັບປຸງອາຄານ | 10% |
| ອຸປະກອນເຄື່ອງໄຟຟ້າ | 20% |
| ເຄື່ອງໃຊ້, ເຄື່ອງຕິດຕັ້ງ ແລະ ອຸປະກອນອື່ນໆ | 20% |
| ຍານພາຫະນະ | 20% |

ລາຍຈ່າຍທີ່ກ່ຽວຂ້ອງກັບລາຍການຂອງຊັບສິນບັດຄົງທີ່ມີຕົວຕົນທີ່ເກີດຂຶ້ນພາຍຫຼັງ ແລະ ເພີ່ມເຂົ້າເປັນຕົ້ນທຶນຊັບສິນໄດ້ ເມື່ອລາຍຈ່າຍເຫຼົ່ານັ້ນເຫັນວ່າຈະເກີດປະໂຫຍດໃນອະນາຄົດ ແລະ ສາມາດເພີ່ມປະສິດທິພາບຂອງຊັບສິນເດີມຂອງສາຂາ. ສ່ວນຄ່າໃຊ້ຈ່າຍອື່ນໆທີ່ຕາມມາ ແມ່ນໃຫ້ບັນທຶກເປັນລາຍຈ່າຍໃນໄລຍະທີ່ເກີດຂຶ້ນ.

ກຳໄລ ຫຼື ຂາດທຶນທີ່ເກີດຈາກການໝົດອາຍຸ ຫຼື ສະສາງຊັບສິນບັດຄົງທີ່ອອກ ແມ່ນໃຫ້ບັນທຶກສ່ວນແຕກຕ່າງລະຫວ່າງລາຄາຄາດຄະເນສຸດທິ ທີ່ສະສາງອອກກັບມູນຄ່າຍັງເຫຼືອຂອງຊັບສິນນັ້ນ ແລະ ສ່ວນແຕກຕ່າງດັ່ງກ່າວແມ່ນໄດ້ບັນທຶກລົງໃນໃບລາຍງານຜົນການດຳເນີນງານ ຕາມວັນທີທີ່ຊັບສິນບັດດັ່ງກ່າວ ໝົດອາຍຸ ຫຼື ຖືກສະສາງອອກ.

ຊັບສິນບັດຄົງທີ່ທີ່ມີການຫັກຄ່າຫຼຸ້ຍຫ້ຽນຄົບຕາມກຳນົດແລ້ວແມ່ນໄດ້ນຳສະເໜີຢູ່ໃນໃບລາຍງານຖານະການເງິນ ຈົນກວ່າມີການຊຳລະສະສາງ ແລະ ລ້າງອອກຈາກບັນຊີ.

### (ດ) ຊັບສິນບັດຄົງທີ່ບໍ່ມີຕົວຕົນ

#### (i) ຊອບແວ໌

ຊອບແວ໌ ໂປແກມທີ່ສາຂາໄດ້ຮັບມາ ແມ່ນບັນທຶກຕາມມູນຄ່າຕົ້ນທຶນລົບໃຫ້ຄ່າເສື່ອມສະສົມ ແລະ ຂາດທຶນຄ່າເສື່ອມມູນຄ່າ ສະສົມ (ຖ້າມີ).

ລາຍຈ່າຍທີ່ເກີດພາຍຫຼັງໃນຊອບແວ໌ແມ່ນເພີ່ມເຂົ້າເປັນຕົ້ນທຶນໄດ້ກໍ່ຕໍ່ເມື່ອເຫັນວ່າຈະເກີດຜົນປະໂຫຍດຕໍ່ກັບທາງດ້ານເສດຖະກິດ ໃນອະນາຄົດຂອງຊັບສິນສະເພາະໃດໜຶ່ງທີ່ກ່ຽວຂ້ອງ. ສ່ວນລາຍຈ່າຍອື່ນໆແມ່ນບັນທຶກເປັນລາຍຈ່າຍໃນເວລາທີ່ເກີດຂຶ້ນ.

ຄ່າເສື່ອມ ແມ່ນຈະຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານໂດຍນຳໃຊ້ການຄິດໄລ່ແບບສະເໝີຕົວຕາມອາຍຸການໃຊ້ງານຂອງຊອບແວ໌, ຈາກມື້ທີ່ມັນສາມາດນຳໃຊ້ໄດ້. ການປະເມີນອາຍຸການນຳໃຊ້ຂອງຊອບແວ໌ ແມ່ນ 5 ປີ.

## 3. ນະໂຍບາຍການບັນຊີທີ່ເປັນສາລະສຳຄັນ (ຕໍ່)

### (ດ) ຊັບສິນບັດຄົງທີ່ບໍ່ມີຕົວຕົນ (ຕໍ່)

#### (ii) ສິດນຳໃຊ້ທີ່ດິນ

ສິດນຳໃຊ້ທີ່ດິນ ປະກອບມີມູນຄ່າທີ່ເກີດຂຶ້ນຈາກການຊື້ສິດນຳໃຊ້ທີ່ດິນຕົວຈິງ ແລະ ຄ່າຕອບແທນຂອງດິນ. ມູນຄ່າເບື້ອງຕົ້ນ ແມ່ນອີງຕາມມູນຄ່າທີ່ເກີດຂຶ້ນ ແລະ ມູນຄ່າຂອງດິນທີ່ໄດ້ຮັບຮອງຈາກ ທາງລັດຖະບານໃນເວລາຊື້. ການຫັກຄ່າເສື່ອມ ແມ່ນຮັບຮູ້ບົນພື້ນຖານການຄາດຄະເນ ຜົນປະໂຫຍດທີ່ເກີດຈາກສິດນຳໃຊ້ທີ່ດິນດັ່ງກ່າວນັ້ນ.

### (ຕ) ເງິນຝາກ

ເງິນຝາກແມ່ນໄດ້ບັນທຶກຕາມມູນຄ່າຕົວຈິງ.

### (ຖ) ລາຍຈ່າຍດອກເບ້ຍ

ລາຍຈ່າຍດອກເບ້ຍຂອງເງິນຝາກລູກຄ້າ ແລະ ລາຍການລະຫວ່າງທະນາຄານ ແລະ ຕະຫຼາດເງິນ (ໜີ້ສິນ) ຮັບຮູ້ໃນໃບລາຍງານຜົນການດຳເນີນງານ ຕາມຫຼັກການຄ້າງຮັບຄ້າງຈ່າຍ.

### (ທ) ອາກອນກຳໄລ

ລາຍຈ່າຍອາກອນປະກອບດ້ວຍອາກອນພາຍໃນປີ ແລະ ອາກອນເຍື້ອນຊຳລະ. ອາກອນໃນປີ ແລະ ອາກອນເຍື້ອນຊຳລະ ແມ່ນຖືກຮັບຮູ້ໃນກຳໄລ ຫຼື ຂາດທຶນ.

ອາກອນໃນປະຈຸບັນ

ອາກອນໃນປະຈຸບັນ ແມ່ນຄິດໄລ່ຕາມກົດໝາຍອາກອນ ຫຼື ຕາມບັນຍັດ ໃນວັນທີທີ່ປະກົດໃນໃບລາຍງານຖານະການເງິນ. ຜູ້ບໍລິຫານໄດ້ຕີລາຄາສະຖານະການທີ່ກົດໝາຍອາກອນໃນປັດຈຸບັນ ອາດມີການຕີຄວາມໝາຍທີ່ແຕກຕ່າງກັນເປັນແຕ່ລະໄລຍະ, ທັງໄດ້ມີການກະກຽມເງິນແຮໄວ້ ໃນກໍລະນີທີ່ເກີດມີຈຳນວນເງິນທີ່ຕ້ອງຈ່າຍເພີ່ມເຕີມໃຫ້ແກ່ກົມສ່ວຍສາອາກອນ.

ອາກອນໃນປະຈຸບັນ ແມ່ນຄິດໄລ່ຈາກລາຍຮັບທັງໝົດໃນປີປະຈຸບັນ ໂດຍອີງຕາມກົດໝາຍສ່ວຍສາອາກອນຂອງ ສປປ ລາວ ສຳລັບກຳໄລໃນແຕ່ລະປີ ທະນາຄານຈະຕ້ອງຈ່າຍອາກອນກຳໄລໃນອັດຕາ 24% ຂອງກຳໄລທັງໝົດກ່ອນການຄິດໄລ່ອາກອນ.

## 3. ນະໂຍບາຍການບັນຊີທີ່ເປັນສາລະສຳຄັນ (ຕໍ່)

(ທ) ອາກອນກຳໄລ (ຕໍ່)

ອາກອນເຍື້ອນຊຳລະ

ອາກອນເຍື້ອນຊຳລະ ຖືກຮັບຮູ້ໂດຍສ່ວນຕ່າງຊົ່ວຄາວລະຫວ່າງ ຍອດຍົກມາຂອງຊັບສິນ ແລະ ໜີ້ສິນ ສຳລັບຈຸດປະສົງ ໃນການລາຍງານທາງການເງິນ ແລະ ຈຳນວນເງິນທີ່ຖືກໃຊ້ ສຳລັບການໄລ່ອາກອນ.

ການວັດແທກມູນຄ່າອາກອນເຍື້ອນຊຳລະ ສະທ້ອນໃຫ້ເຫັນຜົນກະທົບທາງດ້ານອາກອນ ທີ່ຈະເປັນໄປຕາມຮູບແບບທີ່ທາງສາຂາ ຄາດວ່າຈະໄດ້ຮັບຄືນ, ໃນມື້ລາຍງານທ້າຍປີ ເພື່ອຮັບປະກັນ ຫຼື ຊຳລະໜີ້ສິນ ທີ່ຍັງເຫຼືອຂອງຊັບສິນ ແລະ ໜີ້ສິນ.

ອັດຕາອາກອນເຍື້ອນຊຳລະ ແມ່ນຖືກຄິດໄລ່ຕາມອັດຕາ ທີ່ຍອມຮັບໃນສ່ວນທີ່ຜິດດ່ຽງຊົ່ວຄາວ ໃນເວລາທີ່ປີ້ນກັບບັນຊີ ໂດຍອັດຕາທີ່ໃຊ້ຄິດໄລ່ອາກອນ ອີງຕາມກົດໝາຍທີ່ລະບຸໄວ້ແທ້ຈິງ ໃນມື້ທີ່ລາຍງານການເສຍອາກອນ.

ຊັບສິນ ແລະ ໜີ້ສິນ ອາກອນເຍື້ອນຊຳລະ ຖືກລົບລ້າງກັນກໍ່ຕໍ່ເມື່ອມີສິດຜົນບັງຄັບໃຊ້ທາງກົດໝາຍ ເພື່ອລົບລ້າງໜີ້ສິນ ແລະ ຊັບສິນພາຍໃນປີ ເຊິ່ງກ່ຽວພັນການເກັບພາສີຂອງເຈົ້າໜ້າທີ່ສ່ວຍສາອາກອນ ໃນສ່ວນທີ່ມີຈິງ ຫຼື ສ່ວນທີ່ແຕກຕ່າງ ຂອງການເສຍອາກອນເຊັ່ນດຽວກັນ. ແຕ່ວ່າພວກເຂົາໄດ້ຕັ້ງໃຈຊຳລະໜີ້ສິນ ແລະ ຊັບສິນພາຍໃນປີ ຕາມພື້ນຖານລາຍໄດ້ທີ່ຫັກພາສີ ຫຼື ຊັບສິນ ແລະ ໜີ້ສິນ ຂອງພວກເຂົາຈະຖືກຮັບຮູ້ພ້ອມໆກັນ.

ຊັບສິນອາກອນເຍື້ອນຊຳລະໃຊ້ສຳລັບບັນດາອາກອນທີ່ບໍ່ໄດ້ຈ່າຍຍ້ອນຂາດທຶນ, ຍອດຍົກໄປຂອງອາກອນທີ່ຈ່າຍເກີນ ແລະ ລາຍຈ່າຍທີ່ຖືກຍົກເວັ້ນອາກອນ, ໝາຍຄວາມວ່າ ອາກອນກຳໄລຈະຖືກຄິດໄລ່ ໂດຍຫັກບັນດາອາກອນທີ່ບໍ່ໄດ້ຈ່າຍຍ້ອນຂາດທຶນ. ຍອດຍົກໄປຂອງອາກອນ ແລະ ລາຍຈ່າຍທີ່ຖືກຍົກເວັ້ນອາກອນໃນອະນາຄົດທີ່ສາມາດຍອມຮັບໄດ້. ຊັບສິນອາກອນເຍື້ອນຊຳລະ ພິຈາລະນາໃນແຕ່ລະມື້ທີ່ມີການລາຍງານ ແລະ ຖືກລົບລ້າງອອກ ໃນອາກອນກຳໄລທີ່ກ່ຽວຂ້ອງກັບຜົນປະໂຫຍດຂອງອາກອນລາຍໄດ້ ຢ່າງແທ້ຈິງ.

ການເປີດເຜີຍທາງດ້ານອາກອນ

ການແຈ້ງມອບອາກອນຂອງສາຂາ ແມ່ນອີງຕາມການກວດກາຂອງເຈົ້າໜ້າທີ່ອາກອນ. ອີງຕາມກົດໝາຍ ວ່າດ້ວຍ ການສ່ວຍສາອາກອນ ແລະ ລະບຽບການອື່ນໆ ທີ່ກ່ຽວຂ້ອງກັບທຸລະກຳ ທີ່ມີການຕີຄວາມໝາຍເຊິ່ງຕົວເລກທີ່ລະບຸໃນເອກະສານລາຍງານການເງິນ ສາມາດປ່ຽນແປງໄດ້ຕາມການພິຈາລະຄັ້ງສຸດທ້າຍ ຂອງເຈົ້າໜ້າທີ່ສ່ວຍສາອາກອນ.

## 3. ນະໂຍບາຍການບັນຊີທີ່ເປັນສາລະສຳຄັນ (ຕໍ່)

(ທ) ອາກອນກຳໄລ (ຕໍ່)

ການເປີດເຜີຍທາງດ້ານອາກອນ (ຕໍ່)

ລະບົບສ່ວຍສາອາກອນໃນ ສປປລາວ ແມ່ນຍັງໃໝ່ ແລະ ສ້າງຕັ້ງຂຶ້ນຈາກອາກອນຫຼາຍຢ່າງ ແລະ ມີການປ່ຽນແປງນິຕິກຳເລື້ອຍໆ. ເຊິ່ງອາດຈະບໍ່ຈະແຈ້ງ, ກົງກັນຂ້າມກັນ, ແລະ ຈະຕ້ອງມີການຕີຄວາມໝາຍ. ບາງຄັ້ງການຕີຄວາມໝາຍລະຫວ່າງເຈົ້າໜ້າທີ່ອາກອນທີ່ແຕກຕ່າງກັນເກີດຂຶ້ນເລື້ອຍໆ. ອາກອນ ແມ່ນຈະຖືກກວດກາ ແລະ ທົບທວນຄືນ ໂດຍເຈົ້າໜ້າທີ່ສ່ວຍສາອາກອນ ທີ່ແຕ່ງຕັ້ງຕາມກົດໝາຍເພື່ອຄິດໄລ່ການປັບໄໝ, ການລົງໂທດ ແລະ ການຄິດໄລ່ດອກເບ້ຍ.

ເຫດການດັ່ງກ່າວນີ້ ອາດກໍ່ໃຫ້ເກີດຄວາມສ່ຽງທາງອາກອນໃນ ສປປລາວ ທີ່ມີຫຼາຍກວ່າປະເທດອື່ນ. ຜູ້ບໍລິຫານເຊື່ອວ່າທາງສາຂາ ໄດ້ຕັ້ງອາກອນຕ້ອງຈ່າຍພຽງພໍຕາມການຕີຄວາມໝາຍຕາມກົດໝາຍອາກອນ. ເຖິງຢ່າງໃດກໍ່ຕາມ, ເຈົ້າໜ້າທີ່ສ່ວຍສາອາກອນທີ່ກ່ຽວຂ້ອງ ອາດຕີຄວາມໝາຍທີ່ແຕກຕ່າງ ແລະ ອາດສົ່ງຜົນກະທົບທີ່ສຳຄັນຕໍ່ສາຂາ.

(ນ) ເງິນແຮ

ເງິນແຮ ແມ່ນຖືກຮັບຮູ້, ຖ້າເປັນຜົນຂອງການດຳເນີນງານທີ່ຜ່ານມາ. ສາຂາມີພັນທະຕາມກົດໝາຍທີ່ຈະເກີດຂຶ້ນ ແລະ ສາມາດປະເມີນໄດ້ແທ້ຈິງ ແລະ ອາດຈະເປັນໄປໄດ້ວ່າຜົນໄດ້ຮັບຂອງຜົນປະໂຫຍດຈາກເສດຖະກິດຈະຮຽກຮ້ອງໃຫ້ມີການສ້າງຕັ້ງພັນທະດັ່ງກ່າວ. ເງິນແຮແມ່ນຖືກກຳນົດໂດຍການຫຼຸດຄວາມຄາດຫວັງ ກະແສເງິນສົດໃນອະນາຄົດຂອງ ອັດຕາອາກອນທີ່ສົ່ງຜົນກະທົບຕໍ່ການປະເມີນຂອງມູນຄ່າຕະຫຼາດ ແລະ ມີຄວາມສ່ຽງຕໍ່ໜີ້ສິນ.

(ບ) ພາກສ່ວນທີ່ກ່ຽວຂ້ອງ

ພາກສ່ວນທີ່ກ່ຽວຂ້ອງ ແມ່ນພາກສ່ວນທີ່ມີຄວາມອາດສາມາດໂດຍທາງກົງ ຫຼື ທາງອ້ອມທີ່ຈະຄວບຄຸມພາກສ່ວນອື່ນ ຫຼື ມີອຳນາດທີ່ພົ້ນເດັ່ນ ຕໍ່ກັບພາກສ່ວນອື່ນທີ່ກ່ຽວຂ້ອງກັນກັບ ການຕັດສິນໃຈກ່ຽວກັບການເງິນ ແລະ ການດຳເນີນງານ ຫຼື ສາຂາພ້ອມກັບພາກສ່ວນດັ່ງກ່າວມີການຄວບຄຸມຮ່ວມກັນ ຫຼື ມີອຳນາດທີ່ພົ້ນເດັ່ນ. ພາກສ່ວນທີ່ກ່ຽວຂ້ອງອາດເປັນບຸກຄົນ ຫຼື ບໍລິສັດ ແລະ ລວມທັງສະມາຊິກຄອບຄົວຂອງບຸກຄົນໃດໜຶ່ງທີ່ຖືວ່າເປັນພາກສ່ວນທີ່ກ່ຽວຂ້ອງ.

## 4. ເງິນສົດ

| | 2017<br>ກີບ | 2016<br>ກີບ |
|---|---|---|
| LAK | 14.663.866.000 | 50.099.232.500 |
| USD | 64.447.352.634 | 20.102.132.020 |
| THB | 6.346.880.460 | 4.512.719.822 |
| CNY | 26.250.136.954 | 20.005.856.823 |
| | **111.708.236.048** | **94.719.941.165** |

## 5. ໜີ້ຕ້ອງຮັບຈາກທະນາຄານອື່ນ

| | 2017<br>ກີບ | 2016<br>ກີບ |
|---|---|---|
| LAK | 119.222.331.142 | 123.976.565.225 |
| ເງິນຕາຕ່າງປະເທດອື່ນໆ | 11.493.923.708.657 | 7.049.421.748.710 |
| | **11.613.146.039.799** | **7.173.398.313.935** |

ກ) ລາຍການພາຍໃນປະເທດ

| | 2017<br>ກີບ | 2016<br>ກີບ |
|---|---|---|
| ຕາມການທຸລະກັບ | | |
| ທະນາຄານແຫ່ງ ສປປ ລາວ | 50.670.373.909 | 123.084.631.474 |
| ທະນາຄານທຸລະກິດອື່ນໆ | 68.551.957.233 | 891.933.751 |
| | **119.222.331.142** | **123.976.565.225** |

## 5. ໜີ້ຕ້ອງຮັບຈາກທະນາຄານອື່ນ (ຕໍ່)

ຂ) ລາຍການຕ່າງປະເທດ

| | 2017<br>ກີບ | 2016<br>ກີບ |
|---|---|---|
| ຕາມການຮຽກເກັບ | | |
| USD | 11.456.595.192.002 | 6.198.460.506.570 |
| THB | 29.433.229.430 | 41.454.751.472 |
| CNY | 7.893.256.501 | 21.103.220.189 |
| HKD | 2.030.724 | 2.020.479 |
| JPY | - | 788.401.250.000 |
| | **11.493.923.708.657** | **7.049.421.748.710** |

## 6. ເງິນຝາກຕາມລະບຽບການກັບທະນາຄານກາງ

| | 2017<br>ກີບ | 2016<br>ກີບ |
|---|---|---|
| ເງິນຝາກຕາມລະບຽບການ: | | |
| ເງິນຝາກສຳຮອງທຶນຈົດທະບຽນ | 5.000.000 | 5.000.000 |
| ເງິນຝາກບັງຄັບ | 397.457.303.646 | 347.063.803.468 |
| | **397.462.303.646** | **347.068.803.468** |

ຍອດເຫຼືອກັບ ທຫລ ລວມມີ ເງິນຝາກບັງຄັບ ແລະ ເງິນຝາກສຳຮອງທຶນຈົດທະບຽນ ເງິນຝາກເຫຼົ່ານີ້ແມ່ນບໍ່ມີດອກເບ້ຍ.

ພາຍໃຕ້ກົດລະບຽບຂອງ ທຫລ, ສາຂາແມ່ນໄດ້ຖືກຮຽກຮ້ອງໃຫ້ມີການຮັກສາເງິນສົດໄວ້ກັບທຫລ ໃນຮູບແບບຂອງບັນຊີເງິນຝາກແຮບັງຄັບ, ຊຶ່ງຄິດໄລ່ ໃນອັດຕາ 5% ສຳລັບສະກຸນກີບ ແລະ 10% ສຳລັບສະກຸນເງິນຕາຕ່າງປະເທດ (2016: 5% ແລະ 10%), ໃນທຸກໆສອງຄັ້ງຕໍ່ເດືອນ ຂອງເງິນຝາກທັງໝົດຂອງລູກຄ້າທີ່ມີກຳນົດໄລຍະເວລາໜ້ອຍກວ່າ 12 ເດືອນ, ໃນລະຫວ່າງປີ, ທາງສາຂາໄດ້ຮັກສາເງິນຝາກບັງຄັບຕາມລະບຽບການ ເພື່ອໃຫ້ສອດຄ່ອງກັບຂໍ້ກຳນົດຂອງ ທຫລ.

## 7. ເງິນລົງທຶນ

| | 2017<br>ກີບ | 2016<br>ກີບ |
|---|---|---|
| ພັນທະບັດລັດຖະບານ | 623.700.000.000 | 701.550.000.000 |
| ພັນທະບັດທາງການເງິນ | 2.515.296.000.000 | 2.482.160.000.000 |
| ລາຍຮັບດອກເບ້ຍຄ້າງຮັບ | 48.261.862.004 | 44.806.429.594 |
| | **3.187.257.862.004** | **3.228.516.429.594** |

ລົງທຶນນະທີ່ນີ້ ໝາຍເຖິງການລົງທຶນໃນພັນທະບັດ ທີ່ຄອບຄອງຈົນຮອດກຳນົດ. ພັນທະບັດເຫຼົ່ານີ້ ມີໄລຍະຄົບກຳນົດຕັ້ງແຕ່ ວັນທີ 15 ມັງກອນ 2018 ຫາວັນທີ 26 ທັນວາ 2022 (2016: 29 ພຶດສະພາ 2017 ຫາ 21 ມິຖຸນາ 2021) ແລະ ອັດຕາດອກເບ້ຍຕັ້ງແຕ່ 5,75% ຫາ 6,26% (2016: 4,76% ຫາ 6%)

## 8. ເງິນໃຫ້ກູ້ຢືມ ແລະ ເງິນລ່ວງໜ້າ

| | 2017<br>ກີບ | 2016<br>ກີບ |
|---|---|---|
| ເງິນກູ້ ແລະ ໜີ້ຕ້ອງຮັບ: | | |
| - ເງິນເບີກເກີນບັນຊີ | 2.400.558.607 | 1.951.953.339 |
| - ເງິນໃຫ້ກູ້ຢືມ | 2.631.067.250.924 | 7.956.576.849.093 |
| ເງິນໃຫ້ກູ້ຢືມ ແລະ ເງິນລ່ວງໜ້າໃຫ້ລູກຄ້າ | **2.633.467.809.531** | **7.958.528.802.432** |

ສຳລັບລາຍລະອຽດເພີ່ມເຕີມຂອງລະບຽບກ່ຽວກັບການຫັກເງິນແຮ ແມ່ນລະບຸໄວ້ໃນບົດອະທິບາຍ ຂໍ້ 3 (ສ)

### ກ) ຈັດປະເພດຕາມອາຍຸຂອງສິນເຊື່ອທີ່ຍັງເຫຼືອ

| | 2017<br>ກີບ | 2016<br>ກີບ |
|---|---|---|
| ພາຍໃນ 1 ປີ | 1.956.280.934.388 | 7.361.329.625.874 |
| ເກີນ 1 ປີ | 677.186.875.143 | 597.199.176.558 |
| | **2.633.467.809.531** | **7.958.528.802.432** |

## 8. ເງິນໃຫ້ກູ້ຢືມ ແລະ ເງິນລ່ວງໜ້າ (ຕໍ່)

### ຂ) ຈັດປະເພດຕາມສະກຸນເງິນ

| | 2017 | 2016 |
|---|---|---|
| | ກີບ | ກີບ |
| LAK | 11.840.307.644 | 938.785.485 |
| USD | 749.606.920.266 | 1.724.846.156.999 |
| CNY | 1.871.466.629.145 | 6.232.288.679.845 |
| THB | 553.952.476 | 455.180.103 |
| | 2.633.467.809.531 | 7.958.528.802.432 |

### ຄ) ຈັດປະເພດຕາມຂະແໜງທຸລະກິດ

| | 2017 | 2016 |
|---|---|---|
| | ກີບ | ກີບ |
| ອຸດສາຫະກຳ | - | 8.165.000.000 |
| ການກໍ່ສ້າງ | 70.708.569.750 | - |
| ການຄ້າ | 9.350.000.000 | 8.981.500.000 |
| ບໍລິການ | - | 95.838.414.034 |
| ສ່ວນບຸກຄົນ | 13.575.974.450 | 12.752.465.021 |
| ອື່ນໆ | 2.539.833.265.331 | 7.832.791.423.377 |
| | 2.633.467.809.531 | 7.958.528.802.432 |

## 8. ເງິນໃຫ້ກູ້ຢືມ ແລະ ເງິນລ່ວງໜ້າ (ຕໍ່)

ງ) ຈັດປະເພດຕາມຜົນການດຳເນີນງານ

| | 2017 | 2016 |
|---|---|---|
| | ກີບ | ກີບ |
| ສິນເຊື່ອເກີດດອກອອກຜົນ | 2.633.467.809.531 | 7.958.528.802.432 |

ຈ) ຈັດປະເພດຕາມອັດຕາດອກເບ້ຍ (ຕໍ່ປີ)

| | 2017 | 2016 |
|---|---|---|
| | % | % |
| USD | 2,70%-8,45% | 1,09%-8,16% |
| CNY | 3,10%-5,50% | 3,00%-5,00% |

ສ) ການເຄື່ອນໄຫວເງິນແຮທົ່ວໄປ ສຳລັບເງິນໃຫ້ກູ້ຢືມ ແລະ ເງິນລ່ວງໜ້າ ມີດັ່ງລຸ່ມນີ້:

| | 2017 | 2016 |
|---|---|---|
| | ກີບ | ກີບ |
| ຍອດເຫຼືອຕົ້ນປີ | 15.843.287.617 | 6.302.244.056 |
| ສ່ວນຜິດດ່ຽງຈາກການແລກປ່ຽນເງິນຕາ | 1.280.292.311 | (163.463.971) |
| ເງິນແຮທີ່ເກີດຂຶ້ນໃນປີ | 5.820.518.441 | 9.704.507.532 |
| ຍອດເຫຼືອທ້າຍປີ | 22.944.098.369 | 15.843.287.617 |

## 9. ການສານອະນຸພັນຊັບສິນທາງການເງິນ

| | 2017 | 2016 |
|---|---|---|
| | ກີບ | ກີບ |
| ອັດຕາແລກປ່ຽນເງິນຕາຕ່າງປະເທດລ່ວງໜ້າ | - | 508.973.440 |
| ສັນຍາແລກປ່ຽນອັດຕາເງິນຕາຕ່າງປະເທດ | - | 91.370.041.887 |
| | - | 91.879.015.327 |

## 10. ຊັບສິນບັດຄົງທີ່ມີຕົວຕົນ

| | ອາຄານ ກີບ | ສ່ວນປັບປຸງອາຄານ ກີບ | ອຸປະກອນ ເຄື່ອງໄຟຟ້າ ກີບ | ເຟີນີເຈີ, ເຄື່ອງຕິດຕັ້ງ ແລະ ອຸປະກອນ ຫ້ອງການ ກີບ | ຍານພາຫະນະ ກີບ | ລວມ ກີບ |
|---|---|---|---|---|---|---|
| ຕົ້ນທຶນ | | | | | | |
| ຍອດເຫຼືອ ໃນວັນທີ 1 ມັງກອນ 2016 | 152.794.300.966 | 10.361.077.500 | 6.035.558.020 | 9.423.952.360 | 2.848.597.850 | 181.463.486.696 |
| ເພີ່ມຂຶ້ນ | - | - | 334.125.586 | 68.781.014 | - | 402.906.600 |
| ຍອດເຫຼືອ ໃນວັນທີ 31 ທັນວາ 2016 ແລະ 1 ມັງກອນ 2017 | 152.794.300.966 | 10.361.077.500 | 6.369.683.606 | 9.492.733.374 | 2.848.597.850 | 181.866.393.296 |
| ເພີ່ມຂຶ້ນ | - | - | 264.626.483 | 264.616.070 | 402.067.800 | 931.310.353 |
| ສະສາງອອກ | - | (10.361.077.500) | - | (62.562.206) | - | (10.423.639.706) |
| ຍອດເຫຼືອ ໃນວັນທີ 31 ທັນວາ 2017 | 152.794.300.966 | - | 6.634.310.089 | 9.694.787.238 | 3.250.665.650 | 172.374.063.943 |

| | ອາຄານ | ສ່ວນປັບປຸງອາຄານ | ອຸປະກອນ ເຄື່ອງໄຟຟ້າ | ເຟີນິເຈີ, ເຄື່ອງຕິດຕັ້ງ ແລະ ອຸປະກອນ ຫ້ອງການ | ຍານພາຫະນະ | ລວມ |
|---|---|---|---|---|---|---|
| **ຄ່າຫຼຸ້ຍຫ້ຽນສະສົມ** | | | | | | |
| ຍອດເຫຼືອ ໃນວັນທີ 1 ມັງກອນ 2016 | 5.752.010.000 | 4.240.298.400 | 2.396.848.824 | 1.725.138.588 | 2.143.468.063 | 16.257.763.875 |
| ຄ່າຫຼຸ້ຍຫ້ຽນໃນປີ | 7.655.402.400 | 6.120.779.100 | 1.250.191.868 | 1.889.058.706 | 570.967.320 | 17.486.399.394 |
| ຍອດເຫຼືອ ໃນວັນທີ 31 ທັນວາ 2016 ແລະ 1 ມັງກອນ 2017 | 13.407.412.400 | 10.361.077.500 | 3.647.040.692 | 3.614.197.294 | 2.714.435.383 | 33.744.163.269 |
| ຄ່າຫຼຸ້ຍຫ້ຽນໃນປີ | 7.634.486.000 | - | 924.760.212 | 1.894.598.740 | 154.199.757 | 10.608.044.709 |
| ສະສາງອອກ | - | (10.361.077.500) | - | (62.562.206) | - | (10.423.639.706) |
| ຍອດເຫຼືອໃນວັນທີ 31 ທັນວາ 2017 | 21.041.898.400 | - | 4.571.800.904 | 5.446.233.828 | 2.868.635.140 | 33.928.568.272 |
| **ມູນຄ່າທາງບັນຊີ** | | | | | | |
| ໃນວັນທີ 1 ມັງກອນ 2016 | 147.042.290.966 | 6.120.779.100 | 3.638.709.196 | 7.698.813.772 | 705.129.787 | 165.205.722.821 |
| ໃນວັນທີ 31 ທັນວາ 2016 | 139.386.888.566 | - | 2.722.642.914 | 5.878.536.080 | 134.162.467 | 148.122.230.027 |
| ໃນວັນທີ 31 ທັນວາ 2017 | 131.752.402.566 | - | 2.062.509.185 | 4.248.553.410 | 382.030.510 | 138.445.495.671 |

## 11. ຊັບສິນບັດຄົງທີ່ບໍ່ມີຕົວຕົນ

| | ຊອຟແວຣ໌<br>ກີບ | ສິດນຳໃຊ້ທີ່ດິນ<br>ກີບ | ລວມ<br>ກີບ |
|---|---|---|---|
| ຕົ້ນທຶນ | | | |
| ຍອດເຫຼືອ ໃນວັນທີ 1 ມັງກອນ 2016 | 204.602.724 | 51.863.500.000 | 52.068.102.724 |
| ເພີ່ມຂຶ້ນ | - | - | - |
| ຍອດເຫຼືອ ໃນວັນທີ 31 ທັນວາ 2016 ແລະ ໃນວັນທີ 1 ມັງກອນ 2017 | 204.602.724 | 51.863.500.000 | 52.068.102.724 |
| ເພີ່ມຂຶ້ນ | 131.652.000 | - | 131.625.000 |
| ຍອດເຫຼືອ ໃນວັນທີ 31 ທັນວາ 2017 | 336.254.724 | 51.863.500.000 | 52.199.754.724 |
| ຄ່າເສື່ອມສະສົມ | | | |
| ຍອດເຫຼືອ ໃນວັນທີ 1 ມັງກອນ 2016 | 108.710.473 | 1.733.990.111 | 1.842.700.584 |
| ຄ່າເສື່ອມສະສົມໃນປີ | 40.784.182 | 577.470.774 | 618.254.956 |
| ຍອດເຫຼືອ ໃນວັນທີ 31 ທັນວາ 2016 ແລະ ໃນວັນທີ 1 ມັງກອນ 2017 | 149.494.655 | 2.311.460.885 | 2.460.955.540 |
| ຄ່າເສື່ອມສະສົມໃນປີ | 33.854.779 | 575.892.985 | 609.747.764 |
| ຍອດເຫຼືອ ໃນວັນທີ 31 ທັນວາ 2017 | 183.349.434 | 2.887.353.870 | 3.070.703.304 |
| ມູນຄ່າທາງບັນຊີ | | | |
| ໃນວັນທີ 1 ມັງກອນ 2016 | 95.892.251 | 50.129.509.889 | 50.225.402.140 |
| ໃນວັນທີ 31 ທັນວາ 2016 | 55.108.069 | 49.552.039.115 | 49.607.147.184 |
| ໃນວັນທີ 31 ທັນວາ 2017 | 152.905.290 | 48.976.146.130 | 49.129.051.420 |

## 12. ຊັບສິນອາກອນເຍື້ອນຊຳລະ

| | ຊັບສິນອາກອນເຍື້ອນຊຳລະ | | |
|---|---|---|---|
| | ໃນວັນທີ 1 ມັງກອນ 2017 | ລວມກຳໄລ/ຂາດທຶນ ບັນທຶກໃນກຳໄລ ແລະ ຂາດທຶນ | ໃນວັນທີ 31 ທັນວາ 2017 |
| ປ່ຽນແປງມູນຄ່າຍຸຕິທຳຂອງກາ ສານອະນຸພັນທາງການເງິນຊັບ ສິນ ແລະ ໜີ້ສິນ | 1.528.593.166 | (1.528.593.166) | - |
| ເງິນແຮເພື່ອຄວາມສ່ຽງ | 2.500.337.504 | 21.694.746.105 | 24.195.083.609 |
| | 4.028.930.670 | 20.166.152.939 | 24.195.083.609 |

## 13. ຊັບສິນອື່ນໆ

| | 2017 ກີບ | 2016 ກີບ |
|---|---|---|
| ດອກເບ້ຍຄ້າງຮັບ | 259.183.296.062 | 135.968.460.605 |
| ໜີ້ຕ້ອງຮັບອື່ນໆ ແລະ ຈ່າຍລ່ວງໜ້າ | 1.165.512.336 | 2.003.883.705 |
| | 260.348.808.398 | 137.972.344.310 |

## 14. ເງິນຝາກຈາກລູກຄ້າ

### ກ) ຈັດປະເພດຕາມປະເພດເງິນຝາກ

| | 2017<br>ກີບ | 2016<br>ກີບ |
|---|---|---|
| ເງິນຝາກກະແສລາຍວັນ | 3.134.045.789.821 | 2.320.097.260.353 |
| ເງິນຝາກປະຢັດ | 353.767.552.063 | 237.392.682.099 |
| ເງິນຝາກມີກຳນົດ (ຕາມຈຳນວນມື້ທີ່ຄົບກຳນົດ): | | |
| ພາຍໃນ 1 ປີ | 1.134.580.706.805 | 1.151.679.423.122 |
| ຫຼາຍກວ່າ 1 ປີ | 106.584.079.958 | 61.298.912.885 |
| ອື່ນໆ | 11.794.587.000 | 95.097.755.000 |
| | **4.740.772.715.647** | **3.865.566.033.459** |

### ຂ) ຈັດປະເພດຕາມສະກຸນເງິນ

| | 2017<br>ກີບ | 2016<br>ກີບ |
|---|---|---|
| LAK | 164.154.844.701 | 83.681.150.033 |
| USD | 4.173.435.496.858 | 3.658.621.974.688 |
| THB | 31.269.711.118 | 14.725.669.202 |
| CNY | 371.912.662.970 | 108.537.239.536 |
| | **4.740.772.715.647** | **3.865.566.033.459** |

## 14. ເງິນຝາກຈາກລູກຄ້າ (ຕໍ່)

### ຄ) ອັດຕາດອກເບ້ຍ (ຕໍ່ປີ)

| | 2017<br>% | 2016<br>% |
|---|---|---|
| ບັນຊີຝາກປະຢັດ | | |
| LAK | 1,65% | 1,00% |
| USD | 1,00% | 1,00% |
| THB | 0,50% | 0,50% |
| CNY | 0,90% | 0,25% |
| | | |
| ບັນຊີຝາກມີກຳນົດ | | |
| LAK | 2,50%-11,00% | 2,50%-11,00% |
| USD | 0,50%-6,25% | 1,00% - 6,25% |
| THB | 0,75%-4,50% | 0,75%-4,50% |
| CNY | 0,40%-3,00% | 0,40%-3,00% |

## 15. ໜີ້ຕ້ອງສົ່ງໃຫ້ທະນາຄານອື່ນ

| | 2017<br>ກີບ | 2016<br>ກີບ |
|---|---|---|
| ຕາມການຮຽກເກັບ | 764.726.657.723 | 162.526.608.964 |

### ກ) ຈັດປະເພດຕາມທີ່ຢູ່ອາໃສ:

| | 2017<br>ກີບ | 2016<br>ກີບ |
|---|---|---|
| ພາຍໃນປະເທດ | 102.806.657.723 | 89.041.608.964 |
| ຕ່າງປະເທດ | 661.920.000.000 | 73.485.000.000 |
| | 764.726.657.723 | 162.526.608.964 |

## 15. ໜີ້ຕ້ອງສົ່ງໃຫ້ທະນາຄານອື່ນ (ຕໍ່)

ຂ) ຈັດປະເພດຕາມສະກຸນເງິນ:

| | 2017<br>ກີບ | 2016<br>ກີບ |
|---|---|---|
| LAK | 59.705.781.480 | 9.047.509.480 |
| USD | 682.343.332.433 | 127.850.773.374 |
| CNY | 22.677.543.810 | 25.628.326.110 |
| | **764.726.657.723** | **162.526.608.964** |

## 16. ໜີ້ສິນທາງອາກອນ

| | 2017<br>ກີບ | 2016<br>ກີບ |
|---|---|---|
| ອາກອນກຳໄລ | 15.784.739.289 | 11.600.646.520 |
| ອາກອນທັກນະທີ່ຈ່າຍອື່ນໆ | 530.782.816 | - |
| | **16.315.522.105** | **11.600.646.520** |

## 17. ການສານອະນຸພັນໜີ້ສິນທາງການເງິນ

| | 2017<br>ກີບ | 2016<br>ກີບ |
|---|---|---|
| ສັນຍາແລກປ່ຽນອັດຕາເງິນຕາຕ່າງປະເທດ | - | 80.911.110.938 |
| | - | **80.911.110.938** |

## 18. ໜີ້ສິນອື່ນໆ

| | 2017 | 2016 |
|---|---|---|
| | ກີບ | ກີບ |
| ດອກເບ້ຍຄ້າງຈ່າຍ | 172.692.642.789 | 96.881.465.754 |
| ໜີ້ຕ້ອງຈ່າຍໃຫ້ບຸກຄະລາກອນ | 8.553.720.000 | 6.087.925.000 |
| ບັນຊີຊຳລະສະສາງ | 6.626.197.616 | 8.108.228.957 |
| ລາຍຮັບເຍື້ອນຊຳລະ | 116.520.848 | 2.481.782.780 |
| ໜີ້ຕ້ອງຈ່າຍອື່ນໆ | 597.915.171 | 6.934.881.695 |
| | **188.586.996.424** | **120.494.284.186** |

## 19. ທຶນປະກອບສ່ວນຈາກສຳນັກງານໃຫຍ່

| | 2017 | 2016 |
|---|---|---|
| | ກີບ | ກີບ |
| ເງິນທຶນທີ່ປະກອບສ່ວນຕາມກົດໝາຍ | **239.970.000.000** | **239.970.000.000** |

## 20. ຄັງແຮສຳຮອງຕາມລະບຽບການ

ຄັງແຮສຳຮອງຕາມລະບຽບການ ຕ້ອງໄດ້ຮັກສາໄວ້ໃນອັດຕາ 10% ຂອງກຳໄລໃນປີ ເພື່ອປະຕິບັດຕາມຂໍ້ກຳນົດຂອງທະນາຄານແຫ່ງ ສປປ ລາວ.

## 21. ລາຍຈ່າຍດອກເບ້ຍ

| | 2017 | 2016 |
|---|---|---|
| | ກີບ | ກີບ |
| ເງິນຝາກ | 31.415.774.030 | 30.150.709.911 |
| ທຸລະກຳລະຫວ່າງທະນາຄານ ແລະ ຕະຫຼາດເງິນ | 474.115.664.116 | 249.657.831.979 |
| | **505.531.438.146** | **279.808.541.890** |

## 22. ລາຍຮັບອື່ນໆ

| | 2017 | 2016 |
|---|---|---|
| | ກີບ | ກີບ |
| ລາຍຮັບ/(ລາຍຈ່າຍ)ຄ່າທຳນຽມ ແລະ ຄ່າບໍລິການ | | |
| ຄ່າບໍລິການບັດທະນາຄານ | 1.361.584.256 | 981.954.718 |
| ຄ່າບໍລິການອອກໜັງສືຄ້ຳປະກັນ | 461.857.279 | 922.316.580 |
| ຄ່າບໍລິການອອກໜັງສືສິນເຊື່ອ | 34.959.364 | 91.121.811 |
| ຄ່າບໍລິການໂອນເງິນ | 3.728.953.432 | 1.632.012.698 |
| ຄ່າບໍລິການອິແບັງຄິງ | 140.839.405 | 66.198.541 |
| ຄ່າທຳນຽມໃນການໃຫ້ບໍລິການທາງການເງິນ | 15.013.918.913 | 2.890.811.767 |
| ອື່ນໆ | (2.272.835.542) | (1.629.657.286) |
| ລວມລາຍຮັບຄ່າທຳນຽມ ແລະ ຄ່າບໍລິການ | 18.469.277.107 | 4.954.758.829 |
| ກຳໄລຈາກການແລກປ່ຽນ | 60.675.537.354 | 78.967.041.905 |
| ລາຍຮັບອື່ນໆ | 1.962.717.055 | 1.285.138.356 |
| | 81.107.531.516 | 85.206.939.090 |

## 23. ອາກອນກຳໄລ

| | 2017 | 2016 |
|---|---|---|
| | ກີບ | ກີບ |
| ລາຍຈ່າຍອາກອນພາຍໃນປີ | | |
| ພາຍໃນປີ | 93.060.804.963 | 44.465.927.548 |
| ດັດແກ້ໃນປີທີ່ຜ່ານມາ | - | 120.459.505 |
| | 93.060.804.963 | 44.586.387.053 |
| ລາຍຈ່າຍອາກອນເຍື້ອນຊຳລະ | | |
| ປັ້ນກັບສ່ວນທີ່ຜິດດ່ຽງຊົ່ວຄາວ | (20.166.152.939) | (4.028.930.670) |
| | 72.894.652.024 | 40.557.456.383 |

ລາຍຈ່າຍອາກອນກຳໄລ ຖືກຄິດໄລ່ໃນອັດຕາ 24% ຂອງກຳໄລທີ່ຕ້ອງເສຍອາກອນລາຍຮັບ.

ການຄິດໄລ່ອາກອນກຳໄລ ແມ່ນຈະຖືກກວດກາ ແລະ ອະນຸມັດໂດຍເຈົ້າໜ້າທີ່ສ່ວຍສາອາກອນ.

## 23. ອາກອນກຳໄລ (ຕໍ່)

### (i) ການສົມທຽບຜົນກະທົບຂອງອັດຕາອາກອນ

| | *ອັດຕາ* % | 2017 *ກີບ* | *ອັດຕາ* % | 2016 *ກີບ* |
|---|---|---|---|---|
| ກຳໄລກ່ອນອາກອນ | | 292.493.080.320 | | 168.134.537.769 |
| ອາກອນລາຍໄດ້ທີ່ໃຊ້ໃນ ສປປລາວ ອັດຕາອາກອນກຳໄລ | 24,0 | 70.198.339.277 | 24,0 | 40.352.289.065 |
| ລາຍຈ່າຍອາກອນໃນປີນີ້ຫຼຸດລົງເມື່ອທຽບກັບປີທີ່ຜ່ານມາ | - | - | 0,1 | 120.459.505 |
| ອື່ນໆ | 0,9 | 2.696.312.747 | 0,1 | 84.707.813 |
| **ລາຍຈ່າຍອາກອນ** | **24,9** | **72.894.652.024** | **24,1** | **40.557.456.383** |

## 24. ເງິນສົດ ແລະ ທຽບເທົ່າເງິນສົດ

| | 2017 *ກີບ* | 2016 *ກີບ* |
|---|---|---|
| ເງິນສົດ | 111.708.236.048 | 94.719.941.165 |
| ເງິນຝາກ ແລະ ເງິນໃຫ້ກູ້ກັບສຳນັກງານໃຫຍ່ ແລະ ສາຂາອື່ນ | 828.518.533.681 | 1.101.104.595.109 |
| ເງິນຝາກ ແລະ ເງິນໃຫ້ກູ້ກັບທະນາຄານອື່ນ | 6.133.676.039.799 | 1.486.215.560.054 |
| | **7.073.902.809.528** | **2.682.040.096.328** |

## 25. ລາຍການເຄື່ອນໄຫວຂອງພາກສ່ວນທີ່ກ່ຽວຂ້ອງ

ສ່ວນໜຶ່ງຂອງຊັບສິນ, ໜີ້ສິນ, ລາຍຮັບ ແລະ ລາຍຈ່າຍ ຂອງສາຂາແມ່ນເກີດຈາກການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ. ພາກສ່ວນເຫຼົ່ານີ້ ມີສາຍພົວພັນມາຈາກຜູ້ຖືຮຸ້ນສາມັນ ແລະ/(ຫຼື) ຕຳແໜ່ງຜູ້ອຳນວຍການ. ເອກະສານລາຍງານການເງິນ ສະທ້ອນໃຫ້ເຫັນຜົນກະທົບຕໍ່ກັບການເຄື່ອນໄຫວເຫຼົ່ານີ້, ເຊິ່ງຜ່ານການເຈລະຈາຕາມສັນຍາ.

## 25. ລາຍການເຄື່ອນໄຫວຂອງພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

### (ກ) ສຳນັກງານໃຫຍ່ ແລະ ສາຂາອື່ນ ເຊິ່ງຂຶ້ນກັບນິຕິບຸກຄົນດຽວກັນ

| | 2017<br>ກີບ | 2016<br>ກີບ |
|---|---|---|
| ທຸລະກຳລະຫວ່າງທະນາຄານ ແລະ ຕະຫຼາດເງິນ | | |
| ໜີ້ຕ້ອງຮັບຈາກສຳນັກງານໃຫຍ່ ແລະ ສາຂາອື່ນ | 828.518.533.681 | 692.854.595.109 |
| ເງິນກູ້ໃຫ້ສາຂາອື່ນ | - | 2.257.383.922.090 |
| ລວມ | 828.518.533.681 | 2.950.238.517.199 |
| ດອກເບ້ຍຄ້າງຮັບ | - | 10.245.332.296 |
| **ລວມຍອດ** | **828.518.533.681** | **2.960.483.849.495** |

### (i) ລາຍການເຄື່ອນໄຫວຕ່າງປະເທດ

| | 2017<br>ກີບ | 2016<br>ກີບ |
|---|---|---|
| USD | 469.555.133.847 | 2.073.628.409.233 |
| CNY | 358.414.292.593 | 733.719.331.118 |
| EUR | 427.631.031 | 398.498.647 |
| JPY | 121.476.210 | 152.737.610.497 |
| | 828.518.533.681 | 2.960.483.849.495 |

## 25. ລາຍການເຄື່ອນໄຫວຂອງພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

### (ກ) ສຳນັກງານໃຫຍ່ ແລະ ສາຂາອື່ນ ເຊິ່ງຂຶ້ນກັບນິຕິບຸກຄົນດຽວກັນ (ຕໍ່)

| | 2017<br>ກີບ | 2016<br>ກີບ |
|---|---|---|
| **ຍອດເຫຼືອອື່ນໆໃນທ້າຍປີ:** | | |
| ເງິນຝາກຈາກສາຂາອື່ນ | (3.301.618.652.620) | (2.445.926.635.309) |
| ເງິນກູ້ຈາກສຳນັກງານໃຫຍ່ ແລະ ສາຂາອື່ນ | (9.564.374.262.581) | (15.068.550.517.935) |
| ລວມ | (12.865.992.915.201) | (17.514.477.153.244) |
| ໜີ້ຕ້ອງຈ່າຍດອກເບ້ຍ | (139.097.792.337) | (74.285.409.082) |
| ລວມ | **(13.005.090.707.538)** | **(17.588.762.562.326)** |
| **ການເຄື່ອນໄຫວໃນປີ:** | | |
| ລາຍຮັບດອກເບ້ຍຈາກທຸລະກຳລະຫວ່າງ ທະນາຄານ ແລະ ຕະຫຼາດການເງິນ | 32.031.371.815 | 36.136.365.293 |
| ລາຍຈ່າຍດອກເບ້ຍຈາກທຸລະກຳລະຫວ່າງ ທະນາຄານ ແລະ ຕະຫຼາດການເງິນ | (463.210.610.682) | (240.593.603.102) |

## 25. ລາຍການເຄື່ອນໄຫວຂອງພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

(ຂ) ພາກສ່ວນທີ່ກ່ຽວຂ້ອງອື່ນໆ

| | 2017<br>ກີບ | 2016<br>ກີບ |
|---|---|---|
| ຍອດເຫຼືອໃນທ້າຍປີ: | | |
| ໜີ້ຕ້ອງຮັບຈາກທະນາຄານອື່ນ | 31.911.575.691 | 1.238.310.478.729 |
| ເງິນກູ້ຢືມຈາກສະຖາບັນການເງິນອື່ນ ນອກເໜືອຈາກ ສຳນັກງານໃຫຍ່ ແລະ ສາຂາອື່ນ | (661.920.000.000) | (73.485.000.000) |
| ການເຄື່ອນໄຫວໃນປີ: | | |
| ລາຍຮັບດອກເບ້ຍຈາກໜີ້ຕ້ອງຮັບຈາກທະນາຄານອື່ນ | 7.621.184.278 | 35.851.530.340 |
| ລາຍຈ່າຍດອກເບ້ຍເງິນກູ້ຢືມຈາກສະຖາບັນການເງິນອື່ນ ນອກເໜືອຈາກ ສຳນັກງານໃຫຍ່ ແລະ ສາຂາອື່ນ | (10.482.831.212) | (9.063.932.950) |

## 26. ພາລະຜູກພັນ

ໃນພາກປະຕິບັດຂອງການດຳເນີນທຸລະກິດ, ທາງທະນາຄານໄດ້ມີພາລະຜູກພັນຕ່າງໆ ແລະ ໜີ້ສິນ ທີ່ອາດຈະເກີດຂຶ້ນທີ່ແນ່ນອນທາງດ້ານກົດໝາຍໃຫ້ກັບລູກຄ້າຂອງຕົນ ຊຶ່ງປະກອບດ້ວຍ:

| | 2017<br>ກີບ | 2016<br>ກີບ |
|---|---|---|
| ໜັງສືຄ້ຳປະກັນທີ່ຍັງຄ້າງ | 173.675.165.549 | 87.639.532.298 |
| ໜັງສືຂອງການປ່ອຍສິນເຊື່ອທີ່ຍັງຄ້າງ | 4.803.057.000 | 23.449.880.000 |
| | 178.478.222.549 | 111.089.412.298 |

ບໍ່ມີການສູນເສຍ ທີ່ຄາດວ່າຈະເກີດຂຶ້ນຈາກການສູນເສຍລາຍການທຸລະກຳເຫຼົ່ານີ້.